ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

23-29 ກຸມພາ 2024
ປີທີ 13
ສະບັບທີ 959
ລາຍສັບປະດາ

## ໄຊຍະບູລີ ເປີດງານມະຫະກຳບຸນຊ້າງ ແລະ ປີທ່ອງທ່ຽວລາວ 2024



(ສພຊ) ງານມະຫະກຳບຸນຊ້າງຄັ້ງທີ XVII ແລະ ເປີດປີທ່ອງທ່ຽວລາວ 2024 ຂອງແຂວງໄຊຍະບູລີໄດ້ຈັດຂຶ້ນຢ່າງເປັນທາງການໃນຕອນເຊົ້າຂອງວັນທີ 17 ກຸມພາ 2024 ທີ່ເດີ່ນສະໜາມຫຼວງຂອງແຂວງ; ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ທອງລຸນ ສີສຸລິດ ປະທານປະເທດ ພ້ອມດ້ວຍພັນລະຍາ, ທ່ານ ພົງສະຫວັນ ສິດທະວົງເຈົ້າແຂວງໆໄຊຍະບູລີພ້ອມດ້ວຍພັນລະຍາ ແລະ ຕາງໜ້າຈາກສະພາແຫ່ງຊາດນຳໂດຍທ່ານ ພທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດພ້ອມດ້ວຍພັນລະຍາ; ມີບັນດາທ່ານອະດີດການນຳຂັ້ນສູນກາງ, ການນຳພັກ-ລັດຂັ້ນແຂວງ-ເມືອງ, ແຂກພາຍໃນ ແລະ ຕ່າງປະເທດ ພ້ອມດ້ວຍມວນຊົນຊາວແຂວງໄຊຍະບູລີ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນພິທີ, ທ່ານເຜົດພິໄຊ ສູນວິໄລ ຮອງເຈົ້າແຂວງ ທັງເປັນປະທານຈັດງານມະຫະກຳບຸນຊ້າງ ແລະ ເປີດປີທ່ອງທ່ຽວ

ອ່ານຕໍ່ໜ້າ 4

## ສະພາແຫ່ງຊາດ ເປີດຊຸດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ II




(ສພຊ) ໃນວັນທີ 19 ກຸມພາ 2024 ທີ່ສະພາແຫ່ງຊາດ ໄດ້ເປີດຊຸດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ II ໃຫ້ແກ່ສະມາຊິກພັກ-ພະນັກງານພາຍໃນສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມພິທີດັ່ງກ່າວຍັງມີສະຫາຍ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ, ສະ ຫາຍ ຮສ. ພູວົງ ອຸ່ນຄຳແສນ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າສະຖາບັນການ

ອ່ານຕໍ່ໜ້າ 4

## ພິທີມອບ-ຮັບ ໂຄງການນ້ຳປະປາຊຸມຊົນ ຢູ່ບ້ານຈອມທອງ ເມືອງວຽງທອງ



(ສພຊ) ຕອນເຊົ້າຂອງວັນທີ 17 ກຸມພາ 2024 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມເປັນປະທານພິທີມອບ-ຮັບໂຄງການນ້ຳປະປາເພື່ອຊຸມຊົນ ຢູ່ບ້ານຈອມທອງ ເມືອງວຽງທອງ ແຂວງບໍລິຄຳໄຊ ໂດຍມີທ່ານ ປອ. ກອງແກ້ວ

ອ່ານຕໍ່ໜ້າ 8

## ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເຄື່ອນໄຫວເຮັດວຽກຢູ່ເມືອງເຊໂປນ

(ສພຊ) ລະຫວ່າງວັນທີ 14-15 ກຸມພາ 2024, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງເຊໂປນ ໄດ້ເຄື່ອນໄຫວໄປພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ຢູ່ 3 ຈຸດ ຄື: ເຂດຈຸດສຸມຈຽງຕູບ, ເຂດຈຸດສຸມບ້ານດົງສະຫວັນ ແລະ ຫ້ອງວ່າການປົກຄອງເມືອງເຊໂປນ ໂດຍມີການນຳຂອງເມືອງ, ຈຸດສຸມ, ຂະແໜງການ, ຄະນະກຸ່ມ, ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຊ ຊຸດທີ IX ທ່ານຮອງປະທານສະພາແຫ່ງ

ອ່ານຕໍ່ໜ້າ 8

## ທ່ານ ຄຳໃບ ດຳລັດ ຕ້ອນຮັບ ຄະນະມິດຕະພາບລັດຖະສະພາ ໄທ-ລາວ



(ສພຊ) ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການຢ້ຽມຂ່ຳນັບຂອງທ່ານ ຕວງ ອັນທະໄຊ ສະມາຊິກວຸດທິສະພາ, ປະທານຄະນະມິດຕະພາບລັດຖະສະພາໄທ-ລາວພ້ອມດ້ວຍຄະນະເມື່ອວັນທີ 15 ກຸມພາ 2024 ທີ່ຫໍສະພາແຫ່ງຊາດ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ.

ອ່ານຕໍ່ໜ້າ 11

## ຕິດຕາມກວດກາການນຳເຂົ້ານ້ຳມັນເຊື້ອໄຟ



(ສພຊ) ວັນທີ 16 ກຸມພາ 2024 ທ່ານ ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ພ້ອມດ້ວຍຄະນະ ທີ່ປະກອບມີທ່ານຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ທ່ານຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ; ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ບັນດາກົມຂອງກຳມາທິການແລະກະຊວງທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຕິດຕາມກວດກາການນຳເຂົ້ານ້ຳມັນເຊື້ອໄຟຢູ່ນະຄອນຫຼວງວຽງຈັນ ຈຸດປະສົງກໍເພື່ອຊຸກຍູ້, ຕິດຕາມກວດກາການຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ, ລະບົບສາງ ແລະ ການກວດກາຄຸນນະພາບນ້ຳມັນເຊື້ອໄຟ, ຮັບປະກັນຄວາມສະຖຽນລະພາບຂອງການສະໜອງນ້ຳມັນເຊື້ອໄຟໃຫ້ພຽງພໍແລະຕໍ່ເນື່ອງ, ຫຼີກລ່ຽງຄວາມສ່ຽງທີ່ຈະເກີດສະພາບຂາດແຄນນ້ຳມັນເຊື້ອໄຟ ແລະ ບໍ່ໃຫ້ລາຄາມີການເໜັງຕີງຂຶ້ນສູງ.

ຄະນະໄດ້ເຮັດວຽກຮ່ວມກັບກະຊວງອຸດສາຫະກຳ ແລະ

ອ່ານຕໍ່ໜ້າ 8

## ທ່ານຮອງປະທານສະພາແຫ່ງຊາດ ເຄື່ອນໄຫວເຮັດວຽກຢູ່ເມືອງສັງທອງ



(ສພຊ) ໃນວັນທີ 20 ກຸມພາ 2024 ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ພ້ອມດ້ວຍຄະນະປະກອບມີທ່ານຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ, ບັນດາກົມຂອງກຳມາທິການ, ກະຊວງ ແລະ ບັນດາພະແນກການທີ່ກ່ຽວຂ້ອງຂອງນະຄອນຫຼວງວຽງຈັນ ໄດ້ລົງເຄື່ອນໄຫວຊຸກຍູ້, ຕິດຕາມກວດກາການສົ່ງເສີມການຜະລິດກະສິກຳເປັນສິນຄ້າ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າເພື່ອສົ່ງອອກ ຢູ່ເມືອງສັງທອງ.

ໃນໂອກາດນີ້, ທ່ານ ຄຳ

ອ່ານຕໍ່ໜ້າ 4

# ມອບ-ຮັບດອກໄຟເຍືອງທາງໂຊລາເຊວ



(ສພຊ) ວັນທີ 21 ກຸມພາ 2024 ທີ່ຫໍສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບ ຊຸດດອກໄຟເຍືອງທາງໂຊລາເຊວ ໃຫ້ແກ່ສະພາແຫ່ງຊາດ ຈຳນວນ 100 ຊຸດ ລວມມູນຄ່າທັງໝົດ 90.000 ໂດລາສະຫະລັດ, ໂດຍການກ່າວມອບຂອງທ່ານ ຊິງຈູນ ຜູ້ອຳນວຍການບໍລິສັດຮ່ວມທຶນ ລາວ-ຈີນ ຈຳກັດ ແລະ ກ່າວຮັບໂດຍທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມເປັນສັກຂີພະຍານ; ໂອກາດດັ່ງກ່າວ, ທ່ານ ສົມມາດ ພົລເສນາ ໄດ້ກ່າວສະແດງຄວາມຂອບໃຈ ແລະ ໄດ້ຕາງໜ້າສະພາແຫ່ງຊາດ ມອບໃບຍ້ອງຍໍຂອງປະທານຄະນະປະຈຳສະພາແຫ່ງຊາດ ໃຫ້ແກ່ບໍລິສັດຮ່ວມທຶນ ລາວ-ຈີນ ຈຳກັດ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນອຸປະຖຳໃນຄັ້ງນີ້.

**(ນາງ ກຸກກິກ ບຸດດາໄຊ)**

# ຍົກສູງຂີດຄວາມສາມາດວຽກງານວິເຄາະ, ພັດທະນາການຈັດຕັ້ງ ແລະ ການຄຸ້ມຄອງບຸກຄະລາກອນ



(ສພຊ) ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ການເລັ່ງທວງຂອງສະພາບການໃນໄລຍະໃໝ່ ຈຶ່ງມີຄວາມຈຳເປັນຕ້ອງໄດ້ສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ໃນວຽກງານຈັດຕັ້ງ-ພະນັກງານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ; ໃນວັນທີ 20 ກຸມພາ 2024 ທີ່ຫ້ອງວ່າການແຂວງຈຳປາສັກ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຊຸດເຝິກອົບຮົມກ່ຽວກັບວຽກງານວິເຄາະ, ພັດທະນາການຈັດຕັ້ງ ແລະ ການຄຸ້ມຄອງບຸກຄະລາກອນໃຫ້ແກ່ພະນັກງານ-ລັດຖະກອນຂອງກົມຈັດຕັ້ງ-ພະນັກງານແລະສະພາປະຊາຊົນຂັ້ນແຂວງ (ສພຂ) 9 ແຂວງຄື: ນະຄອນຫຼວງວຽງຈັນ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ; ເຂົ້າຮ່ວມມີຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນຂອງກົມຈັດຕັ້ງ-ພະນັກງານ, ເລຂາທິການ-ຮອງເລຂາທິການ ແລະ ພະນັກງານທີ່ຮັບຜິດຊອບວຽກງານຈັດຕັ້ງ-ພະນັກງານຂອງຄະນະເລຂາທິການ ສພຂ 9 ແຂວງ ພ້ອມດ້ວຍວິທະຍາກອນຈາກກະຊວງພາຍໃນ.

ບົດຮຽນທີ່ວິທະຍາກອນນຳມາສະເໜີໃນຄັ້ງນີ້ມີ: 1. ຫຼັກສູດການວິເຄາະ ແລະ ພັດທະນາການຈັດຕັ້ງ ປະກອບມີ 5 ບົດຄື: 1) ຄວາມເຂົ້າໃຈກ່ຽວກັບການວິເຄາະການຈັດຕັ້ງ, 2) ຄວາມເຂົ້າໃຈກ່ຽວກັບຂະບວນການພັດທະນາການຈັດຕັ້ງ, 3) ການນຳໃຊ້ເຄື່ອງມື ແລະ ວິທີວິເຄາະອົງ ການຈັດຕັ້ງ, 4) ການວາງແຜນ ແລະ ການປະຕິບັດການພັດທະນາອົງການຈັດຕັ້ງ, 5) ການຕິດຕາມ ແລະ ການປະເມີນຜົນກິດຈະກຳການພັດທະນາອົງການຈັດຕັ້ງ; 2. ຫຼັກສູດການຄຸ້ມຄອງບຸກຄະລາກອນ ປະກອບມີ 2 ບົດຄື: 1) ການບໍລິຫານຊັບພະຍາກອນມະນຸດ, 2) ຍົກສູງຄຸນນະພາບກ່ຽວກັບການຄຸ້ມຄອງພະນັກງານ.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນກ່າວເປີດຊຸດເຝິກອົບຮົມທີ່ມີບາງຕອນສຳຄັນວ່າ: ວຽກງານວິເຄາະ, ພັດທະນາການຈັດຕັ້ງ ແລະ ການຄຸ້ມຄອງບຸກຄະລາກອນ ເຊິ່ງເປັນຂໍ່ກຸນແຈວຽກທີ່ມີຄວາມສຳຄັນ ແລະ ຈຳເປັນທີ່ສຸດຢູ່ໃນກະຊວງ, ອົງການຕ່າງໆ ກໍຄືສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທັງເປັນວຽກລະອຽດອ່ອນທີ່ພົວພັນເຖິງສິດຜົນປະໂຫຍດ ແລະ ການປະຕິບັດໜ້າທີ່ວຽກງານໂດຍກົງຂອງພະນັກງານ-ລັດຖະກອນ ເນື່ອງຈາກພະນັກງານ-ລັດຖະກອນແມ່ນມີສ່ວນສຳຄັນໃນການຕັດສິນຜົນໄດ້, ຜົນເສຍຂອງການປະຕິບັດໜ້າທີ່ການເມືອງຂອງການຈັດຕັ້ງ ທັງເປັນກຳລັງແຮງໃນການຂັບເຄື່ອນກົງຈັກໃຫ້ກ້າວໄປສູ່ຄວາມສຳເລັດ; ເພື່ອຮັບປະກັນເຮັດໃຫ້ການດຳເນີນຊຸດເຝິກອົບຮົມບັນລຸຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ນັ້ນ, ຮຽກຮ້ອງມາຍັງບັນດາ ທ່ານຜູ້ເຂົ້າຮ່ວມຈົ່ງເອົາໃຈໃສ່ຕິດຕາມຮັບຟັງການສະເໜີ, ຄົ້ນຄວ້າ, ແລກປ່ຽນຄຳເຫັນຕໍ່ເນື້ອໃນເອກະສານຕ່າງໆທີ່ວິທະຍາກອນນຳມາສະເໜີ ເພື່ອເປັນບົດຮຽນໃຫ້ແກ່ການແກ້ໄຂບັນຫາໃນຕໍ່ໜ້າໃຫ້ມີປະສິດທິພາບສູງ.

ການຈັດເຝິກອົບຮົມຄັ້ງນີ້ ຈະດຳເນີນໄປຮອດວັນທີ 23 ກຸມພາ 2024 ຈຶ່ງຈະສຳເລັດ.

**(ນາງ ສຸມິນທາ ງາໄຊ)**

# ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7

## ຕີລາຄາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ




(ສພຊ) ກອງປະຊຸມຕີລາຄາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງປີ 2024 ຂອງຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໄດ້ຈັດຂຶ້ນໃນວັນທີ 20 ກຸມພາ 2024 ທີ່ຫ້ອງປະຊຸມຫ້ອງວ່າການແຂວງ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7; ໂດຍມີທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 7, ຄະນະປະຈຳ-ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ອະດີດ ສສຊ ປະຈຳເຂດເລືອກຕັ້ງທີ 7, ສະມາຊິກສະພາປະຊາຊົນແຂວງ, ເຈົ້າເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງ ພ້ອມດ້ວຍພະນັກງານຫຼັກແຫຼ່ງຂອງສະພາປະຊາຊົນແຂວງໄຊຍະບູລີເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ໄດ້ພ້ອມກັນຮັບຟັງບັນດາບົດລາຍງານ, ຄົ້ນຄວ້າພິຈາລະນາບັນຫາສຳຄັນຂອງທ້ອງຖິ່ນ ແລະ ວຽກງານກາງສະໄໝຂອງແຜນການ 5 ປີ ແລະ ແຜນປະຈຳປີຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ດັ່ງນີ້: ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ, ເອກະຊົນ ທີ່ສູນກາງຄຸ້ມຄອງຈັດຕັ້ງປະຕິບັດຢູ່ແຂວງ ກາງສະໄໝຂອງແຜນການ 5 ປີ (2021-2025), ວຽກງານຈຸດສຸມຮອດທ້າຍສະໄໝ 2025 ແລະ ການຈັດຕັ້ງປະຕິບັດໂຄງການລົງທຶນທີ່ສູນກາງຄຸ້ມຄອງ ປະຈຳປີ 2023 ແລະ ທິດທາງແຜນການປີ 2024 ຂອງອົງການປົກຄອງແຂວງ; ການຈັດຕັ້ງປະຕິບັດລາຍຮັບພູດສູນກາງຄຸ້ມຄອງທີ່ຈັດຕັ້ງປະຕິບັດຢູ່ແຂວງ ກາງສະໄໝຂອງແຜນການ 5 ປີ (2021-2025), ວຽກງານຈຸດສຸມຮອດທ້າຍສະໄໝ 2025 ແລະ ການຈັດຕັ້ງປະຕິບັດລາຍຮັບພູດສູນກາງຄຸ້ມຄອງປະຈຳປີ 2023 ແລະ ທິດທາງແຜນການປີ 2024 ຂອງອົງການປົກຄອງແຂວງ ໂດຍພະແນກການເງິນ; ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ 3 ປີຜ່ານມາ (2021-2023) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025 ຂອງອົງການປົກຄອງແຂວງ ໂດຍພະແນກແຜນການ ແລະ ການລົງທຶນ; ການປະກອບຄຳເຫັນຂອງຕາງໜ້າຄະນະ ສສຊ ປະຈຳເຂດເລືອກຕັ້ງ ຕໍ່ 3 ບົດລາຍງານຂ້າງເທິງຂອງອົງການປົກຄອງແຂວງ; ການປະກອບຄຳເຫັນຂອງບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ; ການຊີ້ແຈງຈາກບັນດາຫົວໜ້າພະແນກການຂອງແຂວງ; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ ຮອດປີ 2025 ແລະ ການຈັດຕັ້ງເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການປີ 2024 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ.

ຫຼັງຈາກການປະກອບຄຳເຫັນ, ຊີ້ແຈງ ແລະ ຄົ້ນຄວ້າພິຈາລະນາຢ່າງລະອຽດຖີ່ຖ້ວນແລ້ວ; ກອງປະຊຸມໄດ້ມີມະຕິຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7. ມະຕິຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ, ເອກະຊົນ ທີ່ສູນກາງຄຸ້ມຄອງຢູ່ແຂວງ, ການຈັດເກັບລາຍຮັບພູດສູນກາງຄຸ້ມຄອງຢູ່ແຂວງ ກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ວຽກງານຈຸດສຸມຮອດທ້າຍປີ 2025; ການຈັດຕັ້ງປະຕິບັດໂຄງການລົງ ທຶນຂອງລັດ, ເອກະຊົນ ທີ່ສູນກາງຄຸ້ມຄອງຢູ່ແຂວງ, ການຈັດເກັບລາຍຮັບພູດສູນກາງຄຸ້ມຄອງຢູ່ແຂວງ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ແລະ ການຈັດຕັ້ງປະຕິບັດວາລະແຫ່ງຊາດ 3 ປີຜ່ານມາ (2021-2023).

**(ສອນສັກ ວັນວິໄຊ)**

ອຸດສາຫະກຳ ຈົ່ງຈູ້
中鉅實業

ບໍລິສັດ ກຸ່ມດວງຈະເລີນ ພັດທະນາກໍ່ສ້າງ ຈຳກັດຜູ້ດຽວ
DDC Group Sole Co.,Ltd
Douang Chaleurn Development Construction Group Sole Co.,Ltd

# ພົບປະສອງຝ່າຍລະຫວ່າງ ຄະນະມິດຕະພາບລັດຖະສະພາ ລາວ-ໄທ




(ສພຊ) ວັນທີ 15 ກຸມພາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ໄທ ພ້ອມດ້ວຍຄະນະ ໄດ້ພົບປະສອງຝ່າຍກັບທ່ານ ຕວງ ອັນທະໄຊ ສະມາຊິກວຸດທິສະພາ, ປະທານຄະນະມິດຕະພາບລັດຖະສະພາ ໄທ-ລາວ ພ້ອມດ້ວຍຄະນະ; ທັງສອງຝ່າຍໄດ້ສະແດງຄວາມປິຕິຍິນດີ ແລະ ຕີລາຄາສູງຕໍ່ການພົບປະໃນຄັ້ງນີ້ ເປັນການນຳເອົາໄມຕີຈິດມິດຕະພາບອັນອົບອຸ່ນ ແລະ ຄວາມສາມັກຄີຮັກແພງຂອງລັດຖະສະພາ ແລະ ປະຊາຊົນໄທ ມາຍັງສະພາແຫ່ງຊາດ ແລະ ປະຊາຊົນລາວບັນດາເຜົ່າ ເຊິ່ງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຖານບ້ານໃກ້ເຮືອນຄຽງທີ່ດີທີ່ມີແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ລາວ-ໄທ, ໄທ-ລາວ ກໍຄືສອງອົງການນິຕິບັນຍັດ ພ້ອມທັງເປັນການຈັດຕັ້ງຜັນຂະຫຍາຍບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະ ສະພາຜູ້ແທນລາສະດອນແຫ່ງ ລາຊະອານາຈັກໄທ ໃຫ້ປາກົດຜົນເປັນຈິງ ແລະ ນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງຊາດ.

ທ່ານ ສຸບັນ ສະວະບຸດ ແຈ້ງໃຫ້ຊາບວ່າ: ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບລັດຖະສະພາໄທ ໃນໄລຍະຜ່ານມາ ໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ ເຊິ່ງສະແດງອອກມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນລະດັບສູງ, ກຳມາທິການ, ຄະນະເລຂາທິການ, ຄະນະມິດຕະພາບລັດຖະສະພາ; ມີການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດນິຕິ

ອ່ານຕໍ່ໜ້າ 11

# ກອງປະຊຸມໃຫຍ່ຄັ້ງທີ II ໜ່ວຍຊາວໜຸ່ມຮາກຖານ ກບຜ

(ສພຊ) ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການບັນດາເຜົ່າ (ກບຜ) ໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 16 ກຸມພາ 2024 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຮ່ວມຂອງສະຫາຍ ຄຳຈັນ ໂສຕາປະເສີດ ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ເລຂາໜ່ວຍພັກຮາກຖານ ກບຜ, ສະຫາຍ ພອນແກ້ວ ຕົ້ນອໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ສຸລິຈັນ ເພັດມະນີ ເລຂາໜ່ວຍຊາວໜຸ່ມຮາກຖານກບຜ (ຜູ້ເກົ່າ); ມີບັນດາສະຫາຍຕາງໜ້າຈາກອົງການກຳມະບານ, ແມ່ຍິງ ໜ່ວຍຮາກຖານ ກບຜ, ກົມວຽກງານຊົນເຜົ່າ, ກົມວຽກງານສາສະໜາ, ໜ່ວຍຊາວໜຸ່ມຮາກຖານພາຍໃນສະພາແຫ່ງຊາດ ແລະ ສະມາຊິກຊາວໜຸ່ມຮາກຖານ ກບຜ ລວມຜູ້ເຂົ້າຮ່ວມທັງໝົດ 34 ສະຫາຍ, ຍິງ 16 ສະຫາຍ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານການເມືອງ ແລະ ບົດສໍາຫຼວດການນໍາພາຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການບັນດາເຜົ່າ ຊຸດທີ I; ຈາກນັ້ນ, ໄດ້ເປັນເອກະພາບ




ພິຈາລະນາ, ຮັບຮອງເອົາບັນດາເນື້ອໃນສຳຄັນຄື: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງຂອງໜ່ວຍຊາວໜຸ່ມຮາກຖານ ກບຜ ເຊິ່ງປະກອບມີ 2 ພາກຄື: ພາກທີ 1 ຕີລາຄາສະພາບການເຄື່ອນໄຫວໄລຍະຜ່ານມາ ແຕ່ປີ 2020-2024 ໃນນັ້ນ ໄດ້ຍົກໃຫ້ເຫັນດ້ານດີຜົນງານຕ່າງໆທີ່ຍາດມາໄດ້ ພ້ອມທັງຍົກໃຫ້ເຫັນດ້ານອ່ອນຂໍ້ຄົງຄ້າງ ແລະ ບັນດາສາເຫດທີ່ຕ້ອງໄດ້ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມຮາກຖານ ກບຜ ດີຂຶ້ນກວ່າເກົ່າ ແລະ ພາກທີ 2 ກຳນົດທິດທາງການເຄື່ອນໄຫວວຽກງານໄລຍະ 5 ປີ (2024-2028) ໃນນັ້ນ, ຕົ້ນຕໍແມ່ນເພີ່ມທະວີສຶກສາອົບຮົມການເມືອງແນວຄິດ, ການພັດທະນາວຽກງານຊາວໜຸ່ມ ຕິດພັນກັບການເປັນເສນາທິການໃຫ້ແກ່ໜ່ວຍພັກຮາກຖານກບຜ ໄປພ້ອມກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ແລະ ແຜນການທີ່ວາງໄວ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ. ຫຼັງຈາກນັ້ນ, ກອງປະຊຸມໄດ້ເສີມຂະຫຍາຍປະຊາທິປະໄຕ ເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານກຳມາທິການບັນດາເຜົ່າຊຸດໃໝ່ໂດຍການປ່ອນບັດ ເຊິ່ງຜົນຂອງການເລືອກຕັ້ງແມ່ນເຫັນດີເລືອກເອົາສະຫາຍ ນາງ ໃຈດາວັນ ວົງໄຊ ເປັນເລຂາຄະນະໜ່ວຍຊາວໜຸ່ມຮາກຖານ, ສະຫາຍ ນາງ ພອນທິດາ ລັດຕະນະວົງ ເປັນຮອງເລຂາໜ່ວຍຊາວໜຸ່ມຮາກຖານ ທັງເປັນປະທານກວດກາ ແລະ ສະຫາຍ ແສງ ແກ້ວອຸດົມ ເປັນກຳມະການ.

ໃນໂອກາດນີ້, ສະຫາຍ ຄຳຈັນ ໂສຕາປະເສີດ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ໂດຍ

ອ່ານຕໍ່ໜ້າ 12

# ຄະນະຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມສັງເກດການການເລືອກຕັ້ງອິນໂດເນເຊຍ



(ສພຊ) ໃນລະຫວ່າງວັນທີ 12-15 ກຸມພາ 2024 ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປ ລາວ ນຳໂດຍ ທ່ານ ຈັນທະວົງ ແສນອາມາດມົນຕີ ສະມາຊິກສະພາແຫ່ງຊາດ, ຮອງປະທານສູນກາງແນວລາວສ້າງຊາດ ໄດ້ເດີນທາງໄປເຂົ້າຮ່ວມສັງເກດການການເລືອກຕັ້ງທົ່ວໄປປະຈຳປີ 2024 ຂອງສາທາລະນະລັດອິນໂດເນເຊຍ ຕາມການເຊື້ອເຊີນຂອງທ່ານເລຂາທິການໃຫຍ່ຂອງສະພາຜູ້ແທນປະຊາຊົນແຫ່ງ ສ.ອິນໂດເນເຊຍ; ການເລືອກຕັ້ງດັ່ງກ່າວ ໄດ້ຈັດຂຶ້ນໃນວັນທີ 14 ກຸມພາຜ່ານມາ ມີຜູ້ເຂົ້າຮ່ວມຫຼາຍກວ່າ 30 ທ່ານທີ່ຖືກເຊີນຈາກບັນດາລັດຖະສະພາຕ່າງປະເທດ, ຕົວແທນຈາກບັນດາທູຕານຸທູດ, ອົງການຈັດຕັ້ງພາກພື້ນ ແລະ ສາກົນ ຫຼາຍກວ່າ 20 ປະເທດ ເຂົ້າຮ່ວມໂຄງການສັງເກດການການເລືອກຕັ້ງປີ 2024 ທີ່ຈັດຂຶ້ນຢູ່ນະຄອນບາຫຼີ, ປະເທດອິນໂດເນເຊຍ.

ບັນດາຜູ້ເຂົ້າຮ່ວມໂຄງການສັງເກດການເລືອກຕັ້ງໃນຄັ້ງນີ້ ໄດ້ເຂົ້າຮ່ວມກອງປະຊຸມໜຶ່ງວັນກ່ອນການເລືອກຕັ້ງ ເພື່ອຮັບຟັງການເຜີຍແຜ່ ແລະ ແນະນຳຂໍ້ມູນກ່ຽວກັບການເລືອກຕັ້ງທົ່ວໄປ, ກິດຈັກການຈັດຕັ້ງຂອງຄະນະກຳມະການການເລືອກຕັ້ງລະດັບຊາດ, ລະດັບແຂວງ, ລະດັບເມືອງ-ເທສະບານ ແລະ ລະດັບຂັ້ນທ້ອງຖິ່ນ (ໜ່ວຍເລືອກຕັ້ງ) ແລະ ວຽກງານຕ່າງໆທີ່ປົກອ້ອມການເລືອກຕັ້ງ.

ສາທາລະນະລັດ ອິນໂດເນເຊຍ ເປັນປະເທດປະຊາທິປະໄຕທີ່ໃຫຍ່ອັນດັບສາມຂອງໂລກ ໂດຍມີການເລືອກຕັ້ງທົ່ວໄປທຸກໆ 5 ປີ ເຊິ່ງຈະເລືອກຕັ້ງເອົາປະທານາທິບໍດີ ແລະ ຮອງປະທານາທິບໍດີ, ສະມາຊິກສະພາຜູ້ແທນປະຊາຊົນ (ສະພາຕ່ຳ), ສະມາຊິກສະພາຜູ້ແທນພາກພື້ນ (ສະພາສູງ), ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ສະມາ

ອ່ານຕໍ່ໜ້າ 11

# ໂຮງຮຽນວັດທະນາ ທັດສະນະສຶກສາຢູ່ສະພາແຫ່ງຊາດ

(ສພຊ) ເພື່ອໃຫ້ນັກຮຽນໄດ້ຮັບຮູ້ ແລະ ມີຄວາມເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ, ໃນວັນທີ 16 ກຸມພາ 2024 ທ່ານ ນາງ ສີສຸວັນ ສິງສະຫວ່າງ ຮອງຜູ້ອຳນວຍການໂຮງຮຽນລ້ຽງເດັກ, ອະນຸບານ-ປະຖົມ-ມັດທະຍົມຕອນຕົ້ນວັດທະນາ ໄດ້ນຳພານັກຮຽນຊັ້ນປະຖົມ-ມັດທະຍົມ ພ້ອມດ້ວຍຄູ-ອາຈານ ຈຳນວນ 200 ກວ່າຄົນ ຈາກໂຮງຮຽນດັ່ງກ່າວ ທ່ຽວຊົມ ແລະ ທັດສະນະສຶກສາຢູ່ສະພາແຫ່ງຊາດ; ໃຫ້ການຕ້ອນຮັບການທັດສະນະສຶກສາຄັ້ງນີ້ ໂດຍທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າກົມສື່ມວນຊົນ, ຄະນະເລຂາທິການສະພາແຫ່ງຊາດ ຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໄດ້ນຳພາຄະນະ ຢ້ຽມຊົມຫ້ອງປະຊຸມໃຫຍ່ ແລະ ຫ້ອງມູນເຊື້ອສະພາແຫ່ງຊາດ. ໃນໂອກາດທັດສະນະສຶກສາຄັ້ງນີ້, ບັນດາຫຼານນ້ອຍນັກຮຽນ ແມ່ນມີຄວາມສົນໃຈຫຼາຍກ່ຽວກັບສະພາແຫ່ງຊາດ ເຊິ່ງສະແດງອອກ ໄດ້ມີການຖາມ-ຕອບຕໍ່ບັນຫາທີ່ຫຼານນ້ອຍນັກຮຽນໃຫ້ຄວາມສົນໃຈ.





## ໄຊຍະບູລີ...

(ຕໍ່ຈາກໜ້າ 1)

ລາວ 2024 ຂອງແຂວງໄຊຍະບູລີ ໄດ້ຂຶ້ນກ່າວລາຍງານການກະກຽມຄວາມພ້ອມໃນການຈັດງານວ່າ: ງານມະຫະກຳບຸນຊ້າງແຂວງໄຊຍະບູລີ ແມ່ນຈັດຂຶ້ນໃນເດືອນກຸມພາຂອງທຸກໆປີ ເຊິ່ງເລີ່ມແຕ່ປີ 2007 ເປັນຕົ້ນມາ, ມາຮອດປີ 2024 ທາງແຂວງໄດ້ຍົກລະດັບການຈັດງານມະຫະກຳບຸນຊ້າງຄັ້ງທີ XVII ຂຶ້ນເປັນງານລະດັບຊາດ ແລະ ເປີດປີທ່ອງທ່ຽວລາວ 2024 ຂອງແຂວງໄຊຍະບູລີ; ງານລະດັບແຂວງແມ່ນບຸນກອງເຂົ້າໃຫຍ່ເມືອງພຽງ ໄດ້ຈັດໃນລະຫວ່າງວັນທີ 9-12 ມັງກອນທີ່ຜ່ານມາ ແລະ ງານລະດັບເມືອງມີ 10 ກິດຈະກຳ, ໃນລະດັບທ້ອງຖິ່ນທີ່ເປັນມູນເຊື້ອ ແລະ ຮີດຄອງປະເພນີທີ່ເປັນເອກະລັກ. ການຈັດງານມະຫະກຳບຸນຊ້າງໃນຄັ້ງນີ້ ກໍເພື່ອເປັນການສືບຕໍ່ອະນຸລັກຮັກສາຊ້າງລາວ ເພາະຊ້າງເປັນມູນມໍລະດົກຂອງຊາດທັງເປັນມິ່ງຂວັນຄູ່ບ້ານຄູ່ເມືອງ; ດ້ານໜຶ່ງກໍເພື່ອສືບຕໍ່ຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມແລະວິຖີການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າແຂວງໄຊຍະບູລີ ທີ່ຕິດພັນກັບຊ້າງມາແຕ່ອະດີດຕະການ ໃຫ້ຍືນຍົງຄົງຕົວຄຽງຄູ່ກັບປະຊາຊົນລາວເຮົາຕະຫຼອດໄປ. ນອກນີ້, ຍັງເປັນການສົ່ງເສີມກິດຈະກຳອະນຸລັກຊ້າງ, ໃຫ້ຊ້າງຈຳນວນ 53 ໂຕທີ່ມາຈາກທົ່ວແຂວງ ໄດ້ພົບກັນ ແລະ ມີໂອກາດໄດ້ສືບພັນ; ພ້ອມກັນນັ້ນກໍເປັນເວທີການສະແດງທັກສະຄວາມສາມາດໃນການຄວບຄຸມຊ້າງຕໍ່ສາທາລະນະຊົນ ແລະ ຍັງເປັນບ່ອນແລກປ່ຽນບົດຮຽນຂອງຄວານຊ້າງ ເພື່ອສືບທອດອາຊີບລ້ຽງຊ້າງໃຫ້ຄົງຢູ່ຄູ່ກັບປວງຊົນລາວຊາວແຂວງໄຊຍະບູລີຕະຫຼອດໄປ, ສ້າງໂອກາດໃຫ້ນັກທ່ອງທ່ຽວໄດ້ສຳຜັດແລະເຫັນການດຳລົງຊີວິດຂອງຊ້າງທີ່ເຄີຍຢູ່ຄູ່ບ້ານຄູ່ເມືອງຕັ້ງແຕ່ອະດີດຈົນເຖິງປັດຈຸບັນ. ສຳລັບກິດຈະກຳຕົ້ນຕໍຂອງການຈັດງານໃນປີນີ້ ແມ່ນຈະເນັ້ນໜັກກິດຈະກຳທີ່ຕິດພັນກັບຊ້າງ ແລະ ການອະນຸລັກຊ້າງ ໂດຍສະເພາະການສະແດງຂອງຊ້າງຄຳຮູ້; ພ້ອມກັນນີ້ ໃນແຕ່ລະວັນຂອງໄລຍະການຈັດງານ ແມ່ນຈະຈັດໃຫ້ມີກິດຈະກຳຫຼາກຫຼາຍສີສັນເປັນຕົ້ນ: ການຈັດວາງສະແດງສິນຄ້າຕະຫຼາດນັດ ໄດ້ເລີ່ມມາແຕ່ວັນທີ 12 ກຸມພາເປັນຕົ້ນມາ ມີສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ, ສິນຄ້າຜົນຜະລິດທາງດ້ານກະສິກຳ, ຫັດຖະກຳ ແລະ ອຸດສາຫະກຳປຸງແຕ່ງທີ່ເປັນທ່າແຮງ ແລະ ຜົນງານຂອງບັນດາ11ຕົວເມືອງພາຍໃນແຂວງ, ມີສິນຄ້ານະວັດຕະກຳທີ່ຕິດພັນທາງດ້ານວິຊາການຂອງບາງພະແນການຂອງແຂວງ, ຫົວໜ່ວຍທຸລະກິດຂອງພາກລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ແລະ ຕົວແທນຂອງຊາວບ້ານ ເຂົ້າຮ່ວມຈຳນວນ 310 ຮ້ານ; ມີພິທີຕັກບາດທຳບຸນໃຫ້ຄົນ ແລະ ຊ້າງ, ຖວາຍສັງຄະທານຕາມຮີດ ຄອງປະເພນີໃນວັນທີ 16 ກຸມພາ. ສຳລັບວັນເປີດງານເປັນທາງການມື້ນີ້ ບັນດາທ່ານຈະໄດ້ຮັບຊົມຂະບວນກ້ອນກຳລັງຂອງແຕ່ລະກ້ອນເຂົ້າສູ່ສະໜາມເພື່ອສະແດງໃຫ້ເຫັນຄວາມສາມັກຄີອັນເປັນປຶກແຜ່ນຂອງມວນຊົນຊາວແຂວງໄຊຍະບູລີ ແລະ ຂະບວນຊ້າງເຂົ້າຮ່ວມມີ 53 ໂຕ, ການສະແດງຂອງຊ້າງຄຳຮູ້ 23 ໂຕ ມີ 20ລາຍການ, ການບາສີສູ່ຂວັນໃຫ້ຊ້າງ ແລະ ການສະແດງໂດດຈ້ອງຂອງກອງພັນທະຫານອາກາດ; ສຳລັບກ້ອນກຳລັງທີ່ເຂົ້າຮ່ວມຂະບວນການໃນງານມະຫະກຳບຸນຊ້າງໃນປີນີ້ ມີທັງໝົດ 9.102 ຄົນ ໃນນີ້ມີກ້ອນຢືນ 5.400 ຄົນ, ກ້ອນແຫ່ 1.974 ຄົນ, ການສະແດງນ້ອງນັກຮຽນ 1.600 ຄົນ, ສິລະປະ ແລະ ນັກຮ້ອງ 104 ຄົນ, ກອງດຸລິຍາງຂອງນັກຮຽນ 24 ນ້ອງ. ຫຼັງຈາກເປີດພິທີເປັນທາງການແລ້ວ, ແຕ່ລະມື້ຈະມີການເປີດໃຫ້ແຂກໄດ້ມາຊົມການສະແດງຂອງຊ້າງຄຳຮູ້, ບໍລິການຂີ່ຊ້າງ, ທ່ຽວຊົມຕະຫຼາດນັດວາງສະແດງສິນຄ້າ ແລະ ຊົມການສະແດງສິລະປະວັນນະຄະດີ, ເຂົ້າຊົມແຫຼ່ງທ່ອງທ່ຽວສູນອະນຸລັກຊ້າງ ແລະ ຂະຫຍາຍພັນຊ້າງອາຊີ (ພູແຄນ) ແລະ ທ່ອງທ່ຽວພາຍໃນເທສະບານແຂວງຕາມສະຖານທີ່ທ່ອງທ່ຽວຕ່າງໆ.

ໃນໂອກາດທີ່ມີຄວາມໝາຍຄວາມສຳຄັນນີ້, ທ່ານ ພົງສະຫວັນ ສິດທະວົງ ໄດ້ກ່າວເປີດງານມະຫະກຳບຸນຊ້າງຄັ້ງທີ XVII ແລະ ເປີດປີທ່ອງທ່ຽວລາວ 2024 ຂອງແຂວງໄຊຍະບູລີ ເຊິ່ງມີບາງຕອນວ່າ: ຂ້າພະເຈົ້າ ຕາງໜ້າໃຫ້ອົງການປົກຄອງແຂວງ ແລະ ປະຊາຊົນບັນດາເຜົ່າພາຍໃນແຂວງ ສຸດທີ່ມີຄວາມປິຕິຊົມຊື່ນ ແລະ ຍິນດີເປັນຢ່າງຍິ່ງທີ່ໄດ້ເປັນກຽດຕ້ອນຮັບການນຳຂັ້ນສູງຂອງພັກ-ລັດຈາກສູນກາງ ແລະ ທ້ອງຖິ່ນ, ບັນດາແຂກພາຍໃນ ແລະ ຕ່າງປະເທດ ທີ່ໄດ້ນຳເອົາຄວາມສາມັກຄີຮັກແພງອັນອົບອຸ່ນ, ໄມຕີຈິດມິດຕະພາບ ມາສູ່ງານມະຫະກຳບຸນຊ້າງປະຈຳປີ 2024; ການຈັດງານຄັ້ງນີ້ ເປັນປີທີ 17 ແລ້ວ ເຊິ່ງເປັນການສົ່ງເສີມມູນເຊື້ອວັດທະນະທຳອັນດີງາມທັງເປັນການສືບຕໍ່ເຜີຍແຜ່ ແລະ ປູກຈິດສຳນຶກໃຫ້ແກ່ອະນຸຊົນ, ຄົນຮຸ່ນຫຼັງ ໃນການອະນຸລັກ ແລະ ຂະຫຍາຍພັນຊ້າງໃຫ້ມີຄວາມຍືນຍົງ ຄຽງຄູ່ກັບວິຖີຊີວິດຂອງປະຊາຊົນບັນດາເຜົ່າຊາວແຂວງໄຊຍະບູລີ ກໍຄືຂອງຊາດລາວພວກເຮົາຕະຫຼອດໄປ.

ໃນວາລະທີ່ມີຄວາມໝາຍຄວາມສຳຄັນນີ້, ທ່ານ ທອງລຸນ ສີສຸລິດ ແລະ ບັນດາການນຳຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ໄດ້ຮ່ວມລັ່ນຄອງ 9 ບາດ, ຕັດແຖບຜ້າເປີດງານມະຫະກຳບຸນຊ້າງຄັ້ງທີXVIIແລະ ເປີດປີທ່ອງທ່ຽວລາວ 2024 ຂອງແຂວງໄຊຍະບູລີ ຢ່າງເປັນທາງການ.

**(ສອນສັກ ວັນວິໄຊ)**



## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ເມືອງ-ການປົກຄອງແຫ່ງຊາດ, ສະຫາຍ ປທ. ແສງແກ້ວ ວົງລຳພັນ ຮອງຫົວໜ້າກົມຄຸ້ມຄອງການຮຽນ-ການສອນ, ສະຖາບັນການເມືອງ-ການປົກຄອງແຫ່ງຊາດ; ບັນດາສະຫາຍຄະນະບໍລິຫານງານພັກສະພາແຫ່ງຊາດ ທີ່ໄດ້ຕາງໜ້າບັນດາໜ່ວຍພັກຮາກຖານສະພາແຫ່ງຊາດ, ບັນດາຄູ-ອາຈານ, ສຳມະນາກອນຈາກສະພາແຫ່ງຊາດ
ເຂົ້າຮ່ວມ.

ຈຸດປະສົງການເປີດຊຸດຮຽນນີ້ ແມ່ນເພື່ອຍົກສູງຄວາມຮັບຮູ້ຄວາມເຂົ້າໃຈກ່ຽວກັບທິດສະດີການເມືອງ, ທິດສະດີມາກ-ເລນິນ, ພຶດຕິກຳຂອງພັກເຮົາໃນແຕ່ລະໄລຍະ ໃຫ້ແກ່ສະມາຊິກພັກ-ພະນັກງານຫຼັກແຫຼ່ງພາຍໃນສະພາແຫ່ງຊາດ ເພື່ອສ້າງໃຫ້ມີຄວາມເຊື່ອໝັ້ນຕໍ່ອຸດົມການຂອງພັກ, ມີທັດສະນະຫຼັກໝັ້ນການເມືອງ, ເສີມຂະຫຍາຍທັດສະນະປະຕິວັດໃຫ້ໜັກແໜ້ນຂຶ້ນຕື່ມ, ຍົກສູງຄວາມສາມາດໃນການວິເຄາະບັນຫາຢ່າງມີວິທະຍາສາດ ແລະ ມີຄວາມສາມາດໃນການນຳໃຊ້ວິທີວິທະຍາໃນການນຳພາ-ຄຸ້ມຄອງ, ວິທີການເຝິກຝົນຫຼໍ່ຫຼອມບຸກຄະລິກຂອງພະນັກງານນຳພາ-ຄຸ້ມຄອງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງປະເທດຊາດໃນໄລຍະໃໝ່ ໃນພາລະກິດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ກ້າວໜ້າຢ່າງບໍ່ຢຸດຢັ້ງ ແລະ ເພື່ອເຮັດໃຫ້ທິດສະດີການເມືອງ ອັນປະກອບດ້ວຍທິດສະດີມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ, ມູນເຊື້ອ ແລະ ປະຫວັດສາດຂອງພັກ, ຂອງຊາດ, ກົດລະບຽບພັກ, ແນວທາງນະໂຍບາຍຂອງພັກ ແລະ ລັດ ກາຍເປັນພື້ນຖານແນວຄິດ ແລະ ການກະທຳຂອງສະມາຊິກພັກ-ພະນັກງານ ສາມາດເຮັດໃຫ້ທຸກຄົນມີຄວາມຮັບຮູ້, ເຂົ້າໃຈ, ມີຄວາມເຊື່ອໝັ້ນ, ມີສະຕິຕື່ນຕົວປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດ, ຍົກລະດັບຄວາມຮູ້ກ່ຽວກັບທັດສະນະ, ນະໂຍບາຍຂອງພັກ-ລັດຢ່າງເລິກເຊິ່ງ, ມີຫຼັກໝັ້ນຢ່າງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດດີ, ມີຈິດໃຈຮັກຊາດ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ.

ໃນພິທີເປີດ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມຕໍ່ຊຸດເຝິກອົບຮົມວ່າ ໂດຍຄວາມສຳຄັນ ແລະ ຈຳເປັນໃນການຈັດຊຸດຮຽນທິດສະດີການເມືອງນີ້ຂຶ້ນ ເພື່ອສ້າງໃຫ້ສະມາຊິກພັກ-ພະນັກງານຂອງສະພາແຫ່ງຊາດ ມີຄວາມຮູ້ດ້ານທິດສະດີພື້ນຖານຂອງລັດທິມາກ-ເລນິນ, ມີທັດສະນະຫຼັກໝັ້ນການເມືອງທີ່ໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ສາມາດຮອງຮັບກັບໜ້າທີ່ການເມືອງໃນໄລຍະໃໝ່ຂອງເງື່ອນໄຂແຫ່ງການເຊື່ອມໂຍງກັບພາກພື້ນ ແລະ ສາກົນໃນປັດຈຸບັນ. ສະແດງຄວາມເຊື່ອໝັ້ນວ່າ ບັນດາສະຫາຍສະມາຊິກພັກ-ພະນັກງານຂອງສະພາແຫ່ງຊາດ ທີ່ໄດ້ຮັບການເລືອກເຟັ້ນຈາກບັນດາໜ່ວຍພັກຮາກຖານຂອງສະພາແຫ່ງຊາດ ຈະພ້ອມກັນສຸມສະຕິປັນຍາ, ຍົກສູງຄວາມຮັບຜິດຊອບຂອງຕົນໃນການຮັບເອົາຄວາມຮູ້ນຳບັນດາຄູອາຈານ, ມີການສົນທະນາຄົ້ນຄວ້າຢ່າງເລິກເຊິ່ງ ເພື່ອໃຫ້ເຂົ້າໃຈບັນດາເນື້ອໃນທີ່ມີໃນຫຼັກສູດການຮຽນຄັ້ງນີ້ ແລະ ເຊື່ອໝັ້ນວ່າພາຍຫຼັງຮຽນຈົບຊຸດຮຽນນີ້ແລ້ວ ບັນດາສະຫາຍສະມາຊິກພັກ, ພະນັກງານຫຼັກແຫຼ່ງຂອງສະພາແຫ່ງຊາດ ຈະສ້າງໃຫ້ມີການປ່ຽນແປງຢ່າງຕັ້ງໜ້າໃນການປະຕິບັດໜ້າທີ່ການເມືອງຂອງຕົນ, ຍົກສູງຄຸນນະພາບ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ມີການປັບປຸງທັດສະນະຫຼັກໝັ້ນການເມືອງ, ແບບແຜນວິທີເຮັດວຽກ ແລະ ແບບແຜນການດຳລົງຊີວິດດີຂຶ້ນ, ສາມາດເປັນກຳລັງແຮງອັນເຂັ້ມ ແຂງໃຫ້ແກ່ຄະນະພັກ ກໍຄືສະພາແຫ່ງຊາດ ເຮັດສຳເລັດໜ້າທີ່ຂອງຕົນ.

**(ນາງ ກຸກກິກ ບຸດດາໄຊ)**

## ທ່ານຮອງປະທານ...

(ຕໍ່ຈາກໜ້າ 1)

ສວຍ ອຸ່ນດາລາ ຮອງເລຂາພັກເມືອງ, ປະທານກວດກາພັກ-ລັດເມືອງສັງທອງ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງສັງທອງ; ທ່ານ ພອນໄຊ ສຸລິຍະວົງ ຕາງໜ້າໃຫ້ແກ່ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໄດ້ລາຍງານກ່ຽວກັບສະພາບການເຊາະເຈື່ອນຂອງຕາຝັ່ງແມ່ນ້ຳຂອງ ແລະ ການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນຂອບເຂດເມືອງສັງທອງ.

ຫຼັງຈາກນັ້ນ, ທ່ານ ສົມມາດ ພົລເສນາ ພ້ອມດ້ວຍຄະນະ ຍັງໄດ້ຢ້ຽມຢາມພື້ນທີ່ປູກໝາກໂມ ແລະ ໝາກເຜັດ ຢູ່ບ້ານຫ້ວຍຄຳ (ຟາມອາຈູ່), ໂຮງຮຽນປະຖົມສົມບູນຫ້ວຍຄຳ ແລະ ຟາມໝູຂອງບໍລິສັດ ເບທາໂກ ລາວ ຈຳກັດຜູ້ດຽວ.

**(ນາງ ກຸກກິກ ບຸດດາໄຊ)**



# ສສຊ ແລະ ສສຂ ເຜີຍແຜ່ຜົນສຳເລັດ
## ກອງປະຊຸມສະໄໝສາມັນ ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II




(ສພຊ) ໃນລະຫວ່າງ ວັນທີ 5-8 ກຸມພາ 2024, ທ່ານ ສົມຈິດ ທັບລະກອນ ກຳມະການຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເມືອງຍອດອູ ໂດຍມີທ່ານ ທອງສີ ອິນຈັກ ຮອງເລຂາພັກເມືອງ, ປະທານກວດກາພັກ-ລັດເມືອງ, ຫົວໜ້າຄະນະສສຂ ປະຈຳເມືອງຍອດອູ ແລະ ທ່ານ ນາງ ສີວັນ ລາວເຊີງ ຮອງປະທານສະຫະພັນກຳມະບານເມືອງ, ສສຂ ປະຈຳເມືອງຍອດອູ ໄດ້ສຳເລັດການລົງເຜີຍແຜ່ເນື້ອໃນຜົນສຳເລັດ ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ II ຢູ່ເມືອງຍອດອູ ແຂວງຜົ້ງສາລີ ເຊິ່ງປະກອບມີ 11 ຈຸດ: ເທສະບານ; 8 ບ້ານ ຄື: ສຸລິນ, ງ້ອງ, ແກ່ງ, ເປີລາວວູ, ຫ້ວຍຍູມ, ແຊວໂຮແປນ, ນ້ຳມ່ານ້ອຍ, ນ້ຳມ່າໃຫຍ່; 2 ກອງຮ້ອຍ ຄື: ກອງຮ້ອຍ 111 ແລະ ກອງຮ້ອຍ 118. ຢູ່ຈຸດເທສະບານແມ່ນໄດ້ຜັດປ່ຽນກັນເຜີຍແຜ່ຂອງບັນດາທ່ານ ສສຊ ແລະ ສສຂ ໂດຍການເຂົ້າຮ່ວມຮັບຟັງຂອງທ່ານ ສົມຫວັງ ສຸມວິໄລ ກຳມະການພັກແຂວງ, ເລຂາພັກເມືອງເຈົ້າເມືອງຍອດອູ; ມີບັນດາທ່ານກຳມະການປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ອົງການທຽບເທົ່າ, ພະນັກງານ-ລັດຖະກອນ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ, ລັດວິສາຫະກິດ, ໂຮງຮຽນ, ໂຮງໝໍ ຕະຫຼອດຮອດເລຂາພັກ ນາຍບ້ານ ສະເພາະຢູ່ເທສະບານເມືອງຍອດອູ ມີຜູ້ເຂົ້າຮ່ວມ 189 ທ່ານ, ຍິງ 83 ທ່ານ. ບັນດາບ້ານ, ກອງຮ້ອຍ ທີ່ຢູ່ເຂດຫ່າງໄກສອກຫຼີກຈາກເທດສະບານ ແມ່ນໄດ້ແບ່ງອອກເປັນ 2 ທີມງານ ເພື່ອລົງພົບປະກັບປະຊາຊົນຜູ້ມີສິດເລືອກຕັ້ງ, ໃນການເຄື່ອນໄຫວໃນແຕ່ລະຈຸດ ມີເລຂາຄະນະພັກຮາກຖານກຸ່ມ, ນາຍບ້ານ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງ ພ້ອມດ້ວຍພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງໃນແຕ່ລະຈຸດ ເຂົ້າຮ່ວມ 823 ທ່ານ, ຍິງ 197 ທ່ານ.

ການລົງພົບປະກັບປະຊາຊົນຜູ້ມີສິດເລືອກຕັ້ງໃນຄັ້ງນີ້, ແມ່ນເພື່ອນຳເອົາເນື້ອໃນຈິດໃຈຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ຕິດພັນກັບ 2 ວາລະແຫ່ງຊາດ, ບົດຊີ້ແຈງຂອງບັນດາທ່ານລັດຖະມົນຕີ ຕໍ່ກອງປະຊຸມສະພາແຫ່ງຊາດ, ເອກະສານມູນເຊື້ອກອງທັບປະຊາຊົນລາວ ຄົບຮອບ 75 ປີ ແລະ ເອກະສານລະນຶກວັນເກີດຂອງປະທານຄຳໄຕ ສີພັນດອນ ຄົບຮອບ 100 ປີ ເພື່ອໄປຈັດຕັ້ງຜັນຂະຫຍາຍຕາມພາລະບົດບາດ, ສິດ ແລະ ໜ້າທີ່ໃນການເປັນຕົວແທນແຫ່ງສິດແລະຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າ ທັງເປັນການຫັນລົງຮາກຖານ, ເກັບກຳບັນດາສະພາບການ, ຄຳຄິດຄຳເຫັນ, ຄຳສະເໜີຕ່າງໆຂອງຜູ້ມີສິດເລືອກຕັ້ງແລະທັງເປັນການຢ້ຽມຢາມຖາມຂ່າວປະຊາຊົນເຂດຫ່າງໄກສອກຫຼີກ. ໃນການລົງເຜີຍແຜ່ຄັ້ງນີ້, ໄດ້ຮັບຟັງການລາຍງານສະພາບການພັດທະນາເສດຖະກິດ-ສັງຄົມ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກຈາກນາຍບ້ານຂອງແຕ່ລະບ້ານໂດຍຫຍໍ້ ແລະ ຄຳສະເໜີຕ່າງໆຈາກປະຊາຊົນ. ພ້ອມດຽວກັນນັ້ນ, ສສຊ ແລະ ສສຂ ກໍໄດ້ຊີ້ແຈງອະທິບາຍຕໍ່ບາງຄຳສະເໜີດັ່ງກ່າວໃຫ້ປະຊາຊົນຮັບຮູ້ເຂົ້າໃຈ ແລະ ຍັງໄດ້ເກັບກຳ, ນຳເອົາບາງຄຳສະເໜີຂອງປະຊາຊົນທີ່ຍັງເຫັນວ່າມີຄວາມຫຍຸ້ງຍາກໃນແຕ່ລະບ້ານ ໂດຍສະເພາະແມ່ນກ່ຽວກັບພື້ນຖານໂຄງລ່າງ ເພື່ອນຳມາຄົ້ນຄວ້າ, ພິຈາລະນາ ແລະ ສັງລວມສົ່ງໃຫ້ພາກສ່ວນກ່ຽວຂ້ອງ ໃຫ້ຮີບຮ້ອນແກ້ໄຂຕາມຄວາມເໝາະສົມແລະທັນຕາມກຳນົດເວລາ.

ນອກຈາກນີ້, ຄະນະຍັງໄດ້ນຳເອົາເຄື່ອງອຸປະໂພກ-ບໍລິໂພກ, ອຸປະກອນກິລາປະເພດບານຕີ ແລະ ວັດຖຸປັດໃຈ ຈຳນວນໜຶ່ງ ມອບໃຫ້ນາຍ ແລະ ພົນທະຫານຂອງກອງຮ້ອຍ 111, ກອງຮ້ອຍ 118 ແລະ ອຳນາດການປົກຄອງບ້ານໃນແຕ່ລະບ້ານ; ການລົງພົບປະເຄື່ອນໄຫວໃນຄັ້ງນີ້ ໄດ້ໃຊ້ເວລາ 4 ວັນ ແລະ ສຳເລັດຜົນຕາມຄາດໝາຍທີ່ວາງໄວ້.

**(ພອນແກ້ວປະເສີດ ສຸລິວົງ)**



# ພົບປະຢ້ຽມຢາມ ແລະ ເຜີຍແຜ່ຜົນສຳເລັດ
## ກອງປະຊຸມສະໄໝສາມັນ ຢູ່ເມືອງຫຼວງນ້ຳທາ



(ສພຊ) ໃນລະຫວ່າງ ວັນທີ 12-13 ກຸມພາ 2024 ສະພາປະຊາຊົນແຂວງຫຼວງນ້ຳທາ ນຳໂດຍທ່ານ ກົງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 3 ແຂວງນ້ຳທາ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງຫຼວງນ້ຳທາ ໄດ້ເຄື່ອນໄຫວພົບປະຢ້ຽມຢາມ ແລະ ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ເມືອງຫຼວງນ້ຳທາ ແຂວງຫຼວງນ້ຳທາ ລວມທັງໝົດ 4 ຈຸດ ຄື: ສະໂມສອນເມືອງຫຼວງນ້ຳທາ, ບ້ານສິນອຸດົມ, ບ້ານຫາດຍອງ ແລະ ບ້ານສີດາ ໂດຍການເຂົ້າຮ່ວມຮັບຟັງມີຄະນະນຳຂອງເມືອງ, ຫົວໜ້າ, ຮອງຫົວໜ້າຫ້ອງການ, ພະນັກງານລັດຖະກອນອ້ອມຂ້າງເມືອງ, ສອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະພັກຮາກຖານ, ອຳນາດການປົກຄອງບ້ານ ແລະ ປະຊາຊົນເຂົ້າຮ່ວມທັງໝົດ 400 ກວ່າຄົນ.

ໃນໂອກາດນີ້, ໄດ້ຮັບຟັງການເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາຫຼາຍບັນຫາພື້ນຖານສຳຄັນຂອງປະເທດຊາດ ເປັນຕົ້ນ ພິຈາລະນາ, ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ ກາງສະໄໝ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການສະຫຼຸບຂາດຕົວຂອງການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023 ແລະ ແຜນເງິນຕາ ປະຈຳປີ 2023, ແຜນງົບປະມານແຫ່ງລັດ ປະຈຳປີ 2024 ແລະ ແຜນເງິນຕາ 2024 ຂອງລັດຖະບານ; ບົດລາຍງານຂອງອົງການກວດກາ ແລະ ກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝຮອດປີ 2025, ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ຮັບຮອງເອົາຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງລັດຖະບານໃນໄລຍະ 3 ປີ (2021-2023); ຮັບຮອງເອົາຜົນຂອງການປະເມີນກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບ; ຮັບຮອງບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 2 ປີເຄິ່ງ (2021-2023) ຂອງອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ; ບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝຮອດປີ 2025 ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງສະພາແຫ່ງຊາດ ຊຸດທີ IX.

ຫຼັງຈາກນັ້ນ, ບັນດາທ່ານ ສສຂ ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຫຼວງນ້ຳທາ ຊຸດທີ II ເຊິ່ງໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນຂອງແຂວງດັ່ງນີ້: ພິຈາລະນາ, ຮັບຮອງບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງແຂວງ; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023 ແລະທິດທາງແຜນການ ປະຈຳປີ 2024 ຂອງແຂວງ; ບົດລາຍງານຂອງອົງການກວດກາລັດແຂວງ ແລະ ອົງການກວດສອບແຫ່ງລັດປະຈຳພາກເໜືອ; ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ; ບົດສະຫຼຸບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສະພາປະຊາຊົນແຂວງ; ຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງການຈັດງານແລະງານບຸນປະເພນີຕ່າງໆຢູ່ບັນດາເມືອງ ແລະ ໄດ້ຮັບຟັງບົດລາຍງານການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ຢູ່ແຂວງຫຼວງນ້ຳທາ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມຮັບຟັງ ຍັງໄດ້ສະເໜີບັນຫາທີ່ພົບຄວາມຫຍຸ້ງຍາກພາຍໃນບ້ານ ເພື່ອໃຫ້ສະພາປະຊາຊົນແຂວງ ນຳສະເໜີພາກສ່ວນທີ່ກ່ຽວຂ້ອງແກ້ໄຂ.

ພ້ອມດຽວກັນນັ້ນ, ທ່ານ ກົງເພັດ ແກ້ວບົວພາ ໄດ້ມີຄຳເຫັນໂອ້ລົມຕໍ່ພໍ່ແມ່ປະຊາຊົນໃຫ້ຈົ່ງພ້ອມກັນປະຢັດມັດທະຍັດ, ສ້າງເສດຖະກິດຄອບຄົວຕົນເອງກຸ້ມຕົນເອງ, ໃຫ້ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ ພ້ອມກັນ ພັດທະນາບ້ານ, ເມືອງ ໃຫ້ມີຄວາມຈະເລີນ ແລະ ປະຕິບັດລະບຽບກົດໝາຍ, ລະບຽບຂອງບ້ານຢ່າງເຂັ້ມງວດ; ຈາກນັ້ນ, ສະພາປະຊາຊົນແຂວງຫຼວງນ້ຳທາ ຍັງນຳເອົາເຄື່ອງນຸ່ງຫົ່ມຈຳນວນໜຶ່ງມອບໃຫ້ພໍ່ແມ່ປະຊາຊົນທີ່ທຸກຍາກຂາດເຂີນຢູ່ບ້ານສິນອຸດົມ, ບ້ານຫາດຍອງ ແລະ ບ້ານສີດາ.

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ຂອງສະພາປະຊາຊົນແຂວງຫຼວງພະບາງ ຊຸດທີ II



(ສພຊ) ໃນລະຫວ່າງວັນທີ 06-07 ກຸມພາ 2024 ທີ່ຜ່ານມາ, ທ່ານ ນາງ ແກ້ວລາ ມະນີຈິດ ເລຂາທິການສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງຫຼວງພະບາງ ປະຈຳເຂດເລືອກຕັ້ງເມືອງນານ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ພົບປະໂອ້ລົມ ຜູ້ມີສິດເລືອກຕັ້ງ ຢູ່ 5 ຈຸດຂອງເມືອງນານ ລວມມີ 5 ບ້ານ ຄື: ທົ່ງຈະເລີນ, ແສງສະຫວ່າງ, ໂພນໄຊ, ແກ້ວມະນີ ແລະ ນາເມືອງກາງ ລວມມີຜູ້ເຂົ້າຮ່ວມທັງໝົດ 287 ທ່ານ ຍິງ 152 ທ່ານ.

ການລົງເຄື່ອນໄຫວໃນຄັ້ງນີ້, ເພື່ອນຳເອົາເນື້ອໃນຈິດໃຈຂອງກອງປະຊຸມ ເປັນຕົ້ນແມ່ນບັນຫາສຳຄັນພື້ນຖານຂອງແຂວງ ແລະ ທິດທາງແຜນການຈຸດສຸມ ໃນປີຕໍ່ໜ້າທີ່ກອງປະຊຸມໄດ້ນຳມາໃຫ້ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງໃນກອງປະຊຸມ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ແລະ ພ້ອມດຽວກັນນັ້ນ, ຍັງໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ຂອງບ້ານຕ່າງໆ ເຊິ່ງໄດ້ຍົກໃຫ້ເຫັນສະພາບເສດຖະກິດ-ສັງຄົມຂອງແຕ່ລະບ້ານມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ສະແດງອອກຄື: ປະຊາຊົນມີຊີວິດການເປັນຢູ່ທີ່ດີຂຶ້ນ, ຖະໜົນຫົນທາງສາມາດນຳໃຊ້ໄດ້ສອງລະດູ, ເຮືອນຊານບ້ານຊ່ອງ ມີລັກສະນະຖາວອນ, ປະຊາຊົນມີວຽກເຮັດງານທຳ ອັນພົ້ນເດັ່ນແມ່ນການປູກມັນຕົ້ນ; ແຕ່ເຖິງຢ່າງໃດກໍຕາມ ປະຊາຊົນຍັງໄດ້ຮຽກຮ້ອງໃຫ້ສະມາຊິກສະພາປະຊາຊົນແຂວງ ຊ່ວຍຂົນຂວາຍຊອກຫາແຫຼ່ງທຶນ ເພື່ອຕອບສະໜອງໃຫ້ແກ່ການປູກຝັງ ແລະ ລ້ຽງສັດເພີ່ມຕື່ມ.

ໃນຕອນທ້າຍ, ທ່ານ ນາງ ແກ້ວລາ ມະນີຈິດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ອົງການຈັດຕັ້ງບ້ານ ແລະ ປະຊາຊົນພາຍໃນບ້ານ ທີ່ໄດ້ເປັນເຈົ້າການໃນການສ້າງສາເສດຖະກິດ-ສັງຄົມຂອງບ້ານເວົ້າລວມ ເວົ້າສະເພາະກໍ່ແມ່ນການສ້າງເສດຖະກິດຄອບຄອບຄົວໃຫ້ມີຄວາມເຂັ້ມແຂງຂຶ້ນເປັນກ້າວໆ.

**(ວິລິຍະ ວັນນະສີ)**

# ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 8 ພົບປະປະຊາຊົນຢູ່ເມືອງວຽງໄຊ

(ສພຊ) ໃນລະຫວ່າງວັນທີ 7-9 ກຸມພາ 2024, ທ່ານນາງອຳໄພວອນ ລ້ອມບຸນແພງ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ທັງເປັນປະທານສະພາປະຊາຊົນແຂວງຫົວພັນ ໄດ້ເຄື່ອນໄຫວພົບປະປະຊາຊົນ ຢູ່ 3 ບ້ານ ຂອງເມືອງວຽງໄຊ ແຂວງຫົວພັນ ຄື: ບ້ານເມືອງງາ, ນາແທ່ນ ແລະ ທາງລ້ອງ ມີການນຳເມືອງ, ອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນເຂົ້າຮ່ວມທັງໝົດ222ຄົນ,ຍິງ117ຄົນ.



ໃນການລົງພົບປະຄັ້ງນີ້, ແມ່ນນຳເອົາຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ລົງຈັດຕັ້ງເຜີຍແຜ່ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດແຜນພັດທະນເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX (2021-2025), ທິດທາງແຜນພັດທະນາເສດຖະກິດ-ສັງຄົມທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2024, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ກາງສະໄໝ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023 ແລະ ແຜນເງິນຕາ ປະຈຳປີ 2023, ແຜນງົບປະມານແຫ່ງລັດປະຈຳປີ2024 ແລະ ແຜນເງິນຕາ ປະຈຳປີ 2024 ແລະ ບັນດາເນື້ອໃນຕ່າງໆຂອງກອງປະຊຸມ ແລະ ຮັບຟັງການລາຍງານສະພາບລວມ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງບ້ານ ພ້ອມທັງຮຽກຮ້ອງໃຫ້ອຳນາດການປົກຄອງບ້ານກໍຄືພໍ່ແມ່ປະຊາຊົນ ເປັນເຈົ້າການສ້າງເສດຖະກິດຂອງບ້ານ, ຂອງຄອບຄົວດ້ວຍການປູກຝັງ, ລ້ຽງສັດ ໃຫ້ກາຍເປັນສິນຄ້າສົ່ງອອກ ເພື່ອສ້າງລາຍຮັບເພີ່ມເຂົ້າສູ່ຄອບຄົວ ແກ້ໄຂຊີວິດການເປັນຢູ່ນັບມື້ດີຂຶ້ນ, ພ້ອມທັງເປັນເຈົ້າການສຶກສາອົບຮົມຄອບຄົວ, ລູກຫຼານ ບໍ່ໃຫ້ຫຍຸ້ງກ່ຽວກັບບັນຫາຢາເສບຕິດ ແລະ ສິ່ງຫຍໍ້ທໍ້ຕ່າງໆ, ປະກອບສ່ວນໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດໃຫ້ມີປະສິດທິຜົນ. ຈາກນັ້ນ, ທ່ານຍັງໄດ້ເປີດໂອກາດໃຫ້ພໍ່ແມ່ປະຊາຊົນ ໄດ້ສະເໜີຄວາມຂັດຂ້ອງໝອງໃຈ ແລ້ວນຳເອົາຄຳສະເໜີດັ່ງກ່າວປະສານສົມທົບກັບພາກສ່ວນກ່ຽວຂ້ອງແກ້ໄຂ.

ພ້ອມດຽວກັນນີ້, ທ່ານຍັງໄດ້ເຄື່ອນໄຫວຕິດຕາມການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງເຈົ້າໜ້າທີ່ຢູ່ຄ້າຍຄຸມຂັງ-ດັດສ້າງຖ້ຳໝູເມືອງງາປກສແຂວງຫົວພັນ, ຕິດຕາມຟາມໝູ ຢູ່ບ້ານເມືອງງາ ແລະ ມອບອຸປະກອນການຮຽນ,ເຄື່ອງຫຼິ້ນກິລາ ແລະເກີບ ຈຳນວນໜຶ່ງ ໃຫ້ບ້ານ ແລະຄອບຄົວທຸກຍາກຕື່ມອີກ.

**(ນັກຂ່າວ ສພຂ ຫົວພັນ)**



# ສະພາປະຊາຊົນແຂວງສາລະວັນ ປັບປຸງ ແລະ ຮຽບຮຽງຄືນຮ່າງນິຕິກຳໃຕ້ກົດໝາຍ 2 ສະບັບ

(ສພຊ) ພາຍຫຼັງທີ່ນິຕິກຳ ຮ່າງຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຮ້ານອາຫານຢູ່ແຂວງສາລະວັນ (ສ້າງໃໝ່) ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການບັນເທີງຢູ່ແຂວງສາລະວັນ (ສ້າງໃໝ່) ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງສາລະວັນ ໄດ້ນຳເຂົ້າຄົ້ນຄວ້າ ພິຈາລະນາ ປະກອບຄຳເຫັນຢ່າງຖີ່ຖ້ວນຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງສາລະວັນ ແລະ ໄດ້ຮັບຮອງເອົານິຕິກຳດັ່ງກ່າວໃນວາລະຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ II ໃນຄັ້ງວັນທີ 12 ມັງກອນ 2024 ທີ່ຜ່ານມາ; ດັ່ງນັ້ນ, ສະພາປະຊາຊົນແຂວງສາລະວັນ ຈຶ່ງໄດ້ຈັດກອງປະຊຸມເພື່ອປັບປຸງ ແລະ ຮຽບຮຽງຄືນນິຕິກຳ 2 ສະບັບດັ່ງກ່າວຂຶ້ນໃນວັນທີ 6 ມັງກອນ 2024 ຢູ່ທີ່ຫ້ອງສະພາປະຊາຊົນແຂວງ




ໂດຍການເປັນປະທານກອງປະຊຸມຂອງ ທ່ານ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ສຸກສະຫວັນ ຈັນທິສຸກ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຄະນະຮັບຜິດຊອບສ້າງນິຕິກຳໃຕ້ກົດໝາຍ, ມີທ່ານສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ, ຄະນະຮັບຜິດຊອບສ້າງຕັນິກຳໃຕ້ກົດໝາຍ, ບັນດາທ່ານຕາງໜ້າຈາກພະແນກການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງສາລະວັນ ພ້ອມດ້ວຍພະນັກງານວິຊາການພາຍໃນສະພາປະຊາຊົນແຂວງສາລະວັນ.

ໃນກອງປະຊຸມ ໄດ້ນຳເອົາຄຳຄິດຄຳເຫັນຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ທີ່ໄດ້ປະກອບຄຳເຫັນຕໍ່ນິຕິກຳໃຕ້ກົດໝາຍ ຄື: ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຮ້ານອາຫານຢູ່ແຂວງສາລະວັນ (ສ້າງໃໝ່) ແລະ ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງການບັນເທີງຢູ່ແຂວງສາລະວັນ (ສ້າງໃໝ່) ໃນກອງປະຊຸມສະໄໝສາມັນທີ່ຜ່ານມາ ມາປັບປຸງ ແລະ ຮຽບຮຽງຄືນ ທັງນີ້, ເພື່ອຮັບປະກັນທາງດ້ານເນື້ອໃນໃຫ້ຄົບຖ້ວນສົມບູນ ແລະ ແທດເໝາະກັບສະພາບຄວາມເປັນຈິງ; ຫຼັງຈາກນັ້ນ, ບັນດາທ່ານຜູ້ແທນໃນກອງປະຊຸມຍັງໄດ້ແລກປ່ຽນບາງບັນຫາ ແລະ ເອກະພາບຮ່ວມກັນປັບປຸງເຂົ້າໃສ່ເນື້ອໃນບາງໝວດ, ບາງມາດຕາ; ພ້ອມນັ້ນ, ຍັງໄດ້ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງສາລະວັນ ສືບຕໍ່ປັບປຸງເນື້ອໃນໃຫ້ສຳເລັດ ແລ້ວນຳເຂົ້າລາຍງານຕໍ່ກອງປະຊຸມຄະນະປະຈຳ ສະພາປະຊາຊົນແຂວງ ພິຈາລະນາກ່ອນນຳສະເໜີໃຫ້ທ່ານເຈົ້າແຂວງ ລົງລາຍເຊັນ ແລະ ປະກາດໃຊ້ຕາມກຳນົດເວລາ.

**(ດີລຳພົນ ພົມມະຈັນ)**



# ປະທານຄະນະ ສສຊ ແຂວງບໍລິຄຳໄຊ ແລະ ສສຂ ສຳເລັດການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ




(ສພຊ) ໃນລະຫວ່າງວັນທີ 5-8 ກຸມພາ 2024 ສະພາປະຊາຊົນແຂວງບໍລິຄຳໄຊ, ນຳພາໂດຍທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງທ່າພະບາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະປະຊາຊົນ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງສະພາປະຊາຊົນແຂວງ ຊຸດທີ II ຢູ່ 6 ບ້ານ ຄື: ໂພນສະຫວັນ, ນາຄຳ, ດອນຄອນລາດ, ຫາດໄຄ້, ຍາງເຄືອ, ສາຍພາຍ, ນາແຄນ, ພະບາດໂພນສັນ(ຄຸ້ມນາເຂົ້າພະ) ແລະ ໂພນງາມ ເມືອງທ່າພະບາດ ເພື່ອໃຫ້ປະຊາຊົນໄດ້ຮັບຮູ້ບັນດາເນື້ອໃນສຳຄັນຕ່າງໆທີ່ລັດຖະບານສະເໜີຕໍ່ກອງປະຊຸມສະພາ ແລະ ທັງເປັນການຢ້ຽມຢາມ-ຖາມຂ່າວຟັງຄຳຄິດເຫັນ ແລະ ຄຳສະເໜີຂອງພໍ່ແມ່ປະຊາຊົນ ເຂົ້າຮ່ວມຮັບຟັງມີການນຳຂອງເມືອງ, ພະນັກງານກໍ່ສ້າງຮາກຖານ, ຫ້ອງການທີ່ກ່ຽວຂ້ອງ, ອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນເຂົ້າຮ່ວມຮັບຟັງ.

ການລົງເຄື່ອນໄຫວເຜີຍແຜ່ໃນຄັ້ງນີ້, ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບຈຸດພິເສດທີ່ຕັ້ງຂອງບ້ານ, ການຊີ້ນຳ-ນຳພາຂອງອົງການປົກຄອງບ້ານ ແລະ ການພັດທະນາເສດຖະກິດ-ສັງຄົມຂອງບ້ານໃນໄລຍະຜ່ານມາ ພ້ອມທັງໄດ້ມີຄຳສະເໜີຫຼາຍບັນຫາ ເປັນຕົ້ນບັນຫາທີ່ດິນ, ບັນຫາເສັ້ນທາງເປ່ເພ ແລະ ອື່ນໆ ຕໍ່ຄະນະ ສສຊ ແລະ ສສຂ ເພື່ອຂໍທິດຊີ້ນຳແລະຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂຊ່ວຍຕາມຄວາມເໝາະສົມ; ຈາກນັ້ນ, ບັນດາທ່ານ ສສຊ ແລະ ສສຂ ກໍໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໂດຍໄດ້ຍົກໃຫ້ເຫັນບັນຫາສຳຄັນຕ່າງໆທີ່ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມ ແລະ ບັນດາເນື້ອໃນຕ່າງໆທີ່ ສສຊ ແລະ ສສຂ ໄດ້ສະເໜີຕໍ່ກອງປະຊຸມ ໂດຍສະເພາະບັນດາປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນສັງຄົມ ກໍຄືແຂວງບໍລິຄຳໄຊ; ພ້ອມກັນນັ້ນ, ໄດ້ຮັບຟັງຄຳສະເໜີຈາກພໍ່ແມ່ປະຊາຊົນ ແລະ ໄດ້ຮັບເອົາຄຳຄິດເຫັນຄຳສະເໜີຂັດຂ້ອງໝອງໃຈຂອງປະຊາຊົນ ເພື່ອນຳໄປຄົ້ນຄວ້າພິຈາລະນາ ແລະ ສະເໜີຕໍ່ອົງການປົກຄອງແຂວງ-ເມືອງ ເພື່ອແກ້ໄຂ ແລະ ອະທິບາຍ-ຊີ້ແຈງ ໃຫ້ປະຊາຊົນຮັບຊາບ.

**(ນາງ ໂສລະຢ້າ)**

# ປະຊາຊົນ 6 ຄອບຄົວ ບ້ານກອງລືໃຫຍ່ ໄດ້ຮັບການຊ່ວຍເຫຼືອສ້າງເຮືອນຫຼັງໃໝ່

(ສພຊ) ພິທີມອບ-ຮັບໂຄງການຊ່ວຍເຫຼືອກໍ່ສ້າງ-ສ້ອມແປງເຮືອນຢູ່ອາໄສ ຈຳນວນ 7 ຫຼັງ ໃຫ້ແກ່ 7 ຄອບຄົວຂອງປະຊາຊົນທີ່ທຸກຍາກຢູ່ບ້ານກອງລືໃຫຍ່ ເມືອງວາປີ ແຂວງສາລະວັນ ໄດ້ຈັດຂຶ້ນໃນວັນທີ 26 ມັງກອນຜ່ານມາ, ທີ່ສະໂມສອນບ້ານກອງລືໃຫຍ່ ໂດຍການເຂົ້າຮ່ວມພິທີມອບ-ຮັບຂອງ ທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງສາລະວັນ, ທ່ານ ບຸນຍູ້ ຈັນທະລັງສີ ເຈົ້າເມືອງວາປີ, ທ່ານ ນາງ ອິນແປງ ຊາມຸນຕີ ປະທານສະມາຄົມມັນຕົ້ນລາວ, ອະດີດປະທານສະພາການຄ້າ ແລະ ອຸດສາຫະກຳແຂວງ, ມີການນຳຂອງແຂວງ, ເມືອງອ້ອມຂ້າງພາຍໃນແຂວງ, ຕ່າງແຂວງ, ພະແນກການ ແລະ ຫ້ອງການອ້ອມຂ້າງເມືອງວາປີ, ພະນັກງານລົງກໍ່ສ້າງຮາກຖານການເມືອງ ປະຈຳເມືອງ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ການຈັດຕັ້ງປະຕິບັດໂຄງການດັ່ງກ່າວ, ໄດ້ລິເລີ່ມຈາກການນຳສະເໜີຂໍ້ມູນຂອງປະທານສະພາປະຊາຊົນແຂວງສາລະວັນລົງທາງສື່ອອນລາຍໂດຍມີຫົວຂໍ້ເນື້ອໃນວ່າ: "ຕົ້ນທຶນຂອງຄົນເຮົາແຕກຕ່າງກັນ" ຈຶ່ງເຮັດໃຫ້ສັງຄົມມີຄວາມສົນໃຈ, ເປັນຫ່ວງເປັນໄຍ ທັງຕ້ອງການໃຫ້ການຊ່ວຍເຫຼືອໂດຍສະເພາະທ່ານ ນາງ ອິນແປງ ຊາມຸນຕີ ປະທານສະພາການຄ້າແຂວງ (ຊຸດເກົ່າ) ມີເຈດຈຳນົງຕ້ອງການຊ່ວຍເຫຼືອ ຈຶ່ງໄດ້ນຳເອົາບັນຫາດັ່ງກ່າວໄປລະດົມທຶນມາຊ່ວຍຕື່ມອີກ ເຮັດໃຫ້ໂຄງການດັ່ງກ່າວໄດ້ຈັດຕັ້ງປະຕິບັດຈົນສຳເລັດ; ໄລຍະການຈັດຕັ້ງປະຕິບັດແມ່ນໄດ້ມີການສົມທົບກັບຫຼາຍພາກສ່ວນໃນການສະໜອງຂໍ້ມູນ, ອຳນວຍຄວາມສະດວກດ້ານແຮງງານ, ການຈັດຊື້ອຸປະກອນຕ່າງໆ ເຂົ້າໃສ່ການກໍ່ສ້າງ ແລະ ອື່ນໆ; ໃນນັ້ນ, ສ້າງເຮືອນຫຼັງໃໝ່ ຈຳນວນ 5 ຫຼັງຄາເຮືອນ, ສ້ອມແປງຕໍ່ເຕີມ 2 ຫຼັງຄາເຮືອນ, ສ້າງຫ້ອງນ້ຳ-ວິດຖ່າຍ ລວມມູນຄ່າທັງໝົດ 220 ລ້ານກວ່າກີບ; ທຶນຈຳນວນດັ່ງກ່າວນີ້ ແມ່ນໄດ້ຈາກການປະກອບສ່ວນຂອງທ່ານ ນາງ ອິນແປງ ຊາມຸນຕີ ເປັນເງິນສົດ 29 ລ້ານກີບ ແລະ ວັດຖຸອຸປະກອນຕ່າງໆ ມູນຄ່າທັງໝົດ 187.800.000 ກີບ, ທຶນສົມທົບຂອງອົງການປົກຄອງເມືອງວາປີ ມູນຄ່າ 30 ລ້ານກີບ ແລະ ລະດົມຈາກພາກສ່ວນອື່ນໆອີກ 4 ລ້ານກວ່າກີບ.

ໂອກາດດຽວກັນ, ຍັງໄດ້ມີການມອບໃບຍ້ອງຍໍໃຫ້ກັບພາກສ່ວນຜູ້ປະກອບທຶນ, ຄະນະກຳມະການຮັບຜິດຊອບການຈັດຕັ້ງປະຕິບັດໂຄງການຂັ້ນເມືອງ, ຂັ້ນແຂວງ ໂດຍໃຫ້ກຽດມອບຂອງທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ, ທ່ານ ບຸນຍູ້ ຈັນທະລັງສີເຈົ້າເມືອງວາປີຕາມລຳດັບ; ພ້ອມດຽວກັນນັ້ນ, ກໍໄດ້ມອບອຸປະກອນກິລາ, ເຄື່ອງຊ່ວຍເຫຼືອປະເພດເຄື່ອງນຸ່ງຫົ່ມ ແລະ ອຸປະກອນຕ່າງໆ ໃຫ້ກັບຄອບຄົວ ແລະ ປະຊາຊົນໃນບ້ານກອງລືໃຫຍ່ ຕື່ມອີກ.

**(ວິໄລວອນ ສິດທິໄຊ)**




# ແລກປ່ຽນບົດຮຽນລະຫວ່າງຄະນະເລຂາທິການ ສະພາປະຊາຊົນແຂວງ ກັບຫ້ອງວ່າການແຂວງຊຽງຂວາງ



(ສພຊ) ໃນວັນທີ 5 ກຸມພາ 2024 ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງຊຽງຂວາງ ໄດ້ເປີດກອງປະຊຸມແລກປ່ຽນບົດຮຽນລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງກັບຫ້ອງວ່າການແຂວງຊຽງຂວາງປະຈຳປີ 2023 ໂດຍການປະທານຂອງທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ ຜູ້ຊີ້ນຳວຽກງານຄະນະເລຂາທິການສະພາປະຊາຊົນແຂວງ, ໃຫ້ກຽດເຂົ້າຮ່ວມຂອງທ່ານ ສົມພອນ ສີອາໄພ ຫົວໜ້າຫ້ອງວ່າການແຂວງ ແລະ ທ່ານ ນາງ ສາຍພູເງິນ ອຸດົມສຸກ ເລຂາທິການສະພາປະຊາຊົນແຂວງ, ມີບັນດາທ່ານຮອງປະທານຄະນະກຳມະການສະພາປະຊາຊົນແຂວງ, ຄະນະຫ້ອງວ່າການແຂວງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານສະພາປະຊາຊົນແຂວງແລະຫ້ອງວ່າການແຂວງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການສະຫຼຸບຕີລາຄາການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ທິດທາງແຜນການຕໍ່ໜ້າຂອງຄະນະເລຂາທິການສະພາປະຊາຊົນແຂວງ ແລະ ຫ້ອງວ່າການແຂວງ ເຊິ່ງໄລຍະຜ່ານມາໄດ້ມີຜົນສຳເລັດຫຼາຍດ້ານເປັນຕົ້ນແມ່ນປະສານສົມທົບກັນໃນການກະກຽມຈັດກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງກັບອົງການປົກຄອງແຂວງ, ເປັນໃຈກາງໃນການຊຸກຍູ້, ພົວພັນ ແລະ ປະສານງານກັບບັນດາພະແນກການ, ອົງການ, ກົມກອງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ເປັນໃຈກາງປະສານງານຮ່ວມກັນໃນການນຳສິ່ງແລະຈໍລະຈອນເອກະສານ ເພື່ອໃຫ້ຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາຄົ້ນຄວ້າຕົກລົງບັນຫາສຳຄັນພື້ນຖານໃດໜຶ່ງ, ປະສານງານຮ່ວມກັນໃນການປະຕິບັດວຽກງານພິທີການ ແລະ ຮັບແຂກການນຳຂັ້ນສູງຈາກສະພາແຫ່ງຊາດ ທີ່ມາເຄື່ອນໄຫວວຽກງານຢູ່ແຂວງຊຽງຂວາງ ແລະ ໃນທິດທາງໃນຕໍ່ໜ້າ ເພື່ອໃຫ້ວຽກງານຂອງຄະນະເລຂາທິການ ແລະ ຫ້ອງວ່າການແຂວງ ໄດ້ເຄື່ອນໄຫວຢ່າງມີປະສິດທິພາບ ຈະໄດ້ສືບຕໍ່ກຳນົດລະບອບປະຊຸມຮ່ວມກັນ ເພື່ອໃຫ້ການປະຕິບັດໜ້າທີ່ເປັນເສນາທິການໃຫ້ດີກວ່າເກົ່າ ໂດຍສະເພາະປະຊຸມກັນກ່ອນ ເພື່ອກະກຽມເນື້ອໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງ, ເພີ່ມທະວີກົນໄກປະສານງານລະຫວ່າງຄະນະເລຂາທິການ ແລະ ຫ້ອງວ່າການແຂວງ ເພື່ອປະຕິບັດໜ້າທີ່ວຽກງານຮອບດ້ານໃຫ້ແກ່ການນຳສະພາປະຊາຊົນແຂວງ ແລະການນຳແຂວງ ໃຫ້ມີຄວາມວ່ອງໄວຂຶ້ນ, ຮັບປະກັນທາງດ້ານຫຼັກການໃນການປະສານງານໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງກວ່າເກົ່າ. ນອກນີ້, ບັນດາຜູ້ແທນກອງປະຊຸມຍັງມີຄຳເຫັນແລກປ່ຽນເຊິ່ງກັນ ແລະ ກັນ ເປັນຕົ້ນແມ່ນການພົວພັນປະສານງານກັບພາກສ່ວນທີ່ກ່ຽວຂ້ອງໃນການກະກຽມເນື້ອໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງ, ການກວດກາເງິນຮ່ວງພັດທະນາທ້ອງຖິ່ນ, ການແກ້ໄຂບັນດາຄຳສະເໜີຂອງປະຊາຊົນ, ການປັບປຸງກົນໄກປະສານງານໃຫ້ສະດວກ ແລະ ວ່ອງໄວຂຶ້ນກວ່າເກົ່າ ແລະ ບັນຫາອື່ນໆອີກຈຳນວນໜຶ່ງ.

**(ນາງ ສຸກສະຫວັນ ອິນທະແສງ)**

# ປັບປຸງບາງເນື້ອໃນ 4 ຮ່າງຂໍ້ຕົກລົງ ຂອງທ່ານເຈົ້າແຂວງອຸດົມໄຊ



(ສພຊ) ວັນທີ 25 ມັງກອນຜ່ານມາ, ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ຄະນະປະຈຳສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມປະຈຳເດືອນ ມັງກອນ 2024, ເພື່ອຮັບຟັງລາຍງານການປັບປຸງບາງມາດຕາ, ບາງເນື້ອໃນ 4 ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ຈາກຄະນະຮັບຜິດຊອບ ໂດຍການເປັນປະທານຂອງທ່ານຄຳດີ ວົງລ້ອມ ປະທານຄະນະປະຈຳສະພາປະຊາຊົນແຂວງ, ມີຮອງປະທານ, ບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າພະແນກ-ຄະນະພະແນກ, ຫົວໜ້າຂະແໜງ, ຄະນະຮັບຜິດຊອບຮ່າງ ແລະ ສ້າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ເຂົ້າຮ່ວມ.

ກອງປະຊຸມ, ບັນດາທ່ານຕາງໜ້າຄະນະຮັບຜິດຊອບຮ່າງ ແລະ ສ້າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ໄດ້ລາຍງານການປັບປຸງເນື້ອໃນຄືນ, ບາງໝວດ, ບາງມາດຕາ ຂອງຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ຈຳນວນ 4 ສະບັບຄື: ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຊີນລະປະທານ ຢູ່ແຂວງອຸດົມໄຊ; ຮ່າງຂໍ້ຕົກລົງວ່າດ້ວຍນະໂຍບາຍ ແລະ ລາຄາຫົວໜ່ວຍຊົດເຊີຍຜົນກະທົບຈາກໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມໂຍງ ແລະ ເຊື່ອມຈອດ ຢູ່ແຂວງອຸດົມໄຊ; ຮ່າງຂໍ້ຕົກລົງວ່າດ້ວຍລາຄາຫົວໜ່ວຍນ້ຳປະປາ ຢູ່ແຂວງອຸດົມໄຊ ແລະ ຮ່າງຂໍ້ຕົກລົງວ່າດ້ວຍການມອບ ແລະ ຖອນສິດນຳໃຊ້ທີ່ດິນຂອງລັດ ຢູ່ແຂວງອຸດົມໄຊ ເຊິ່ງບັນດາຂໍ້ຕົກລົງດັ່ງກ່າວແມ່ນໄດ້ນຳເຂົ້າຜ່ານໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ໃນຄັ້ງວັນທີ 9-12 ມັງກອນ 2024 ທີ່ຜ່ານມາ ແລະ ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ໄດ້ຄົ້ນຄວ້າ, ພິຈາລະນາ, ປະກອບຄຳເຫັນຢູ່ໃນກອງປະຊຸມຢ່າງເລິກເຊິ່ງ, ກົງໄປກົງມາ ແລະ ໄດ້ລົງຄະແນນສຽງຮັບຮອງເອົາຢ່າງເປັນທາງການ.

ບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ, ໄດ້ມີຄຳຄິດຄຳເຫັນແລກປ່ຽນກັບຄະນະຮັບຜິດຊອບຮ່າງ ແລະ ສ້າງຂໍ້ຕົກລົງດັ່ງກ່າວວ່າ: ເນື້ອໃນຂອງບາງໝວດ, ບາງມາດຕາ ທີ່ສາມາດປັບປຸງໄດ້ ແລະ ບໍ່ສາມາດປັບປຸງໄດ້ແມ່ນຍ້ອນສາເຫດໃດ ແລະ ຫຼັງຈາກນັ້ນ ຄະນະຮັບຜິດຊອບໄດ້ຊີ້ແຈງອະທິບາຍຕໍ່ຄະນະປະຈຳສະພາປະຊາຊົນແຂວງ ເພື່ອຄວາມເປັນເອກະພາບກັນກ່ຽວກັບການປັບປຸງເນື້ອໃນຕ່າງໆ.

ໃນຕອນທ້າຍ, ປະທານໄດ້ມີຄຳເຫັນ ເຊິ່ງທ່ານໄດ້ສະແດງຄວາມຂອບໃຈພາກສ່ວນກ່ຽວຂ້ອງທີ່ໃຫ້ການຮ່ວມມື ແລະ ປັບປຸງຂໍ້ຕົກລົງດັ່ງກ່າວຕາມຄຳຄິດຄຳເຫັນຂອງບັນດາທ່ານສະພາປະຊາຊົນແຂວງເພື່ອເຮັດໃຫ້ເນື້ອໃນຄົບຖ້ວນສົມບູນ, ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບຫຼັກການ, ສະພາບຄວາມເປັນຈິງໃນປັດຈຸບັນ ແລະ ສາມາດນຳສະເໜີຕໍ່ທ່ານເຈົ້າແຂວງລົງລາຍເຊັນ, ປະກາດໃຊ້ ແລະ ນຳໄປຈັດຕັ້ງປະຕິບັດ ໃຫ້ມີປະສິດທິພາບແລະປະສິດທິຜົນສູງ.

**(ນັກຂ່າວ ສພຊ ອຸດົມໄຊ)**




## ທ່ານ ປອ. ນາງ...

(ຕໍ່ຈາກໜ້າ 1)

ຊາດ ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ແຈ້ງໃຫ້ຜູ້ມີສິດເລືອກຕັ້ງຊາບບັນດາເອກະສານສຳຄັນທີ່ກອງປະຊຸມສະໄໝສາມັນເທື່ອທີ 6 ໄດ້ພິຈາລະນາ ແລະ ຮັບຮອງເອົາ ເປັນຕົ້ນແມ່ນບົດລາຍງານໂດຍສັງເຂບຂອງລັດຖະບານກ່ຽວກັບສະພາບການເຄື່ອນໄຫວປະຕິບັດແຜນພັດທະນາເສດຖະກິດ-ສັງຄົມທີ່ພົ້ນເດັ່ນໄລຍະກາງສະໄໝ 5 ປີ (2021-2023) ແລະ ທິດທາງແຜນການທ້າຍສະໄໝຮອດປີ 2025, ການເຄື່ອນໄຫວປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2023) ແລະ ທິດທາງແຜນການຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2003 ແລະ ທິດທາງແຜນການປີ 2024 ຂອງອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ຂອງສະພາແຫ່ງຊາດ. ພ້ອມນັ້ນ, ກໍໄດ້ແຈ້ງໃຫ້ຊາບກ່ຽວກັບການສ້າງ ແລະ ປັບປຸງກົດໝາຍ ທັງ 7 ສະບັບ ແລະ ການປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການເລືອກຕັ້ງ ຈຳນວນ 67 ທ່ານ.

ໃນການພົບປະກັບການນຳ ແລະ ພະແນກການອ້ອມຂ້າງເມືອງເຊໂປນ, ທ່ານຮອງປະທານສະພາແຫ່ງຊາດໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຄວາມພະຍາຍາມຂອງເມືອງ, ຂອງບັນດາຈຸດສຸມ ອັນໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນເລື້ອຍໆ.

ໃນການພົບປະນັ້ນ, ບັນດາຜູ້ມີສິດເລືອກຕັ້ງໄດ້ມີຄຳສະເໜີຫຼາຍຢ່າງ ເຊັ່ນ: ຕ້ອງການເຄື່ອງຕອງນ້ຳສະອາດໃຫ້ປະຊາຊົນໄດ້ຊົມໃຊ້, ຕິດຕັ້ງເສົາສັນຍານໂທລະສັບ, ຕົວເລກລັດຖະກອນຄູ, ການບຸກເບີກເນື້ອທີ່ທຳການຜະລິດ, ການຊົດເຊີຍເນື້ອທີ່ດິນຈາກການກໍ່ສ້າງຂົວເຂົ້າບ້ານ, ໂຮງຮຽນ, ສຸກສາລາ, ການແກ້ໄຂບັນຫາຢາເສບຕິດ, ບັນຫາຄວາມຫຍຸ້ງຍາກດ້ານຊີວິດການເປັນຢູ່ຂອງພະນັກງານລັດຖະກອນ ເຊິ່ງໂດຍສ່ວນໃຫຍ່ການນຳຂອງແຂວງ ແລະ ເມືອງ, ພະແນກການໄດ້ມີການຊີ້ແຈງຕໍ່ຜູ້ມີສິດເລືອກຕັ້ງ.

ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ມີຄຳເຫັນເນັ້ນໜັກໃຫ້ປະຊາຊົນສືບຕໍ່ນຳໃຊ້ທ່າແຮງທຳການຜະລິດກະສິກຳ ເປັນຕົ້ນແມ່ນການປູກມັນຕົ້ນ, ປູກກ້ວຍ ທີ່ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວ ເພາະດຽວນີ້ມີຕະຫຼາດຮອງຮັບທີ່ແນ່ນອນ ເພື່ອປັບປຸງຊີວິດການເປັນຢູ່ໃຫ້ນັບມື້ນັບດີຂຶ້ນ.

ໃນໂອກາດລົງເຄື່ອນໄຫວໃນຄັ້ງນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ພ້ອມດ້ວຍຄະນະ ຍັງໄດ້ນຳເອົາເຄື່ອງຊ່ວຍເຫຼືອຈຳນວນໜຶ່ງ ປະກອບມີເຄື່ອງນຸ່ງຫົ່ມ, ເຄື່ອງອຸປະໂພກ-ບໍລິໂພກ, ອຸປະກອນການຮຽນ, ອຸປະກອນກິລາ ໄປມອບໃຫ້ປະຊາຊົນເຂດຈຸດສຸມຈຽງຕູບ ແລະ ເຂດຈຸດສຸມບ້ານດົງສະຫວັນ ເຊິ່ງມີມູນຄ່າເປັນຈຳນວນເງິນ 10 ກວ່າລ້ານກີບ.

**(ກົງທະນູຄຳ ພິພັດເສລີ)**

## ຕິດຕາມກວດກາ...

(ຕໍ່ຈາກໜ້າ 1)

ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ ແລະລັດວິສາຫະກິດນ້ຳມັນເຊື້ອໄຟລາວ ເພື່ອຮັບຟັງການລາຍງານສະພາບການນຳເຂົ້ານ້ຳມັນເຊື້ອໄຟ, ການກວດກາຄຸນນະພາບນ້ຳມັນເຊື້ອໄຟ, ສະພາບການສະໜອງເງິນຕາແລະການແລກປ່ຽນເງິນຕາ ເພື່ອຈັດຊື້ນ້ຳມັນເຊື້ອໄຟ, ຄົ້ນຄວ້າກົນໄກການອຳນວຍຄວາມສະດວກດ້ານການບໍລິການຂົນສົ່ງຢູ່ເຂດໂລຊິດສະຕິກ ເພື່ອຮັບປະກັນດ້ານຄວາມປອດໄພຈາກຄວາມສ່ຽງໃນການເຕົ້າໂຮມລົດນ້ຳມັນເຊື້ອໄຟເປັນຈຳນວນຫຼາຍ ພ້ອມທັງຫຼຸດຜ່ອນຂອດການດຳເນີນເອກະສານ ແລະ ການເກັບລາຍຮັບເຂົ້າງົບປະມານຈາກການນຳເຂົ້ານ້ຳມັນເຊື້ອໄຟ.

ໃນໂອກາດດັ່ງກ່າວ, ຄະນະຍັງໄດ້ລົງຢ້ຽມຢາມສະຖານທີ່ການນຳເຂົ້ານ້ຳມັນເຊື້ອໄຟ, ການກວດກາຄຸນນະພາບ ແລະ ການຈັດຕັ້ງປະຕິບັດການຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ ຢູ່ເຂດໂລຊິດສະຕິກ; ນອກນັ້ນ, ກໍໄດ້ລົງເຄື່ອນໄຫວເບິ່ງສາງຈັດເກັບນ້ຳມັນເຊື້ອໄຟຂອງລັດວິສາຫະກິດນ້ຳມັນເຊື້ອໄຟລາວ ແລະ ບໍລິສັດ ພີວີອອຍ.

## ພິທີມອບ-ຮັບ...

(ຕໍ່ຈາກໜ້າ 1)

ໄຊສິງຄາມ ເລຂາພັກແຂວງ, ເຈົ້າແຂວງໆບໍລິຄຳໄຊ, ທ່ານ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ອຳນາດການປົກຄອງເມືອງ, ຜູ້ຕາງໜ້າລັດວິສາຫະກິດນ້ຳປະປາແຂວງ, ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ພ້ອມດ້ວຍພໍ່ແມ່ປະຊາຊົນພາຍໃນບ້ານເຂົ້າຮ່ວມ.

ໂຄງການກໍ່ສ້າງລະບົບນ້ຳປະປາບ້ານຈອມທອງ ໄດ້ເລີ່ມລົງມືກໍ່ສ້າງແຕ່ວັນທີ 18 ພະຈິກ 2022 ເປັນຕົ້ນມາ ພາຍໃຕ້ເງື່ອນໄຂສັນຍາລະຫວ່າງພະແນກພະລັງງານ ແລະ ບໍ່ແຮ່ ກັບລັດວິສາຫະກິດນ້ຳປະປາແຂວງບໍລິຄຳໄຊ, ໂດຍມີມູນຄ່າ 3.081 ລ້ານກວ່າກີບ ຫຼື ເທົ່າກັບ 257.223 ໂດລາ, ກຳນົດໄລຍະເວລາກໍ່ສ້າງຕາມສັນຍາແມ່ນ 18 ເດືອນ ແຕ່ກໍ່ສ້າງແລ້ວກ່ອນກຳນົດ 4 ເດືອນ. ລະບົບໂຮງງານນ້ຳປະປາແຫ່ງນີ້ສາມາດຜະລິດນ້ຳໄດ້240ແມັດກ້ອນ/ວັນ, ແຕ່ໃນຕົວຈິງສາມາດຜະລິດນ້ຳໄດ້ບໍ່ຕໍ່າກວ່າ 350 ແມັດກ້ອນ/ວັນ ເກີນແຜນການ 46% ຄາດວ່າຈະສາມາດຕອບສະໜອງປະລິມານນ້ຳທີ່ສະອາດ-ປອດໄພໃຫ້ແກ່ປະຊາຊົນໄດ້ຊົມໃຊ້ຢ່າງພຽງພໍ ແລະ ຍັງມີເງື່ອນໄຂສາມາດຂະຫຍາຍໄປຫາເຂດພື້ນທີ່ອື່ນຕື່ມອີກ ຕາມຄວາມຕ້ອງການຂອງປະຊາຊົນມີຄວາມຮຽກຮ້ອງຕ້ອງການຊົມໃຊ້.

ໃນພິທີ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມ ໂດຍໄດ້ຍົກໃຫ້ເຫັນຄວາມຈຳເປັນ ແລະ ຄວາມສຳຄັນໃນການມີລະບົບນ້ຳປະປາໃຊ້ໃນຄົວເຮືອນ ກໍຄືການທຳມາຫາກິນຂອງປະຊາຊົນໃນບ້ານຈອມທອງ ທີ່ຍັງຂາດເຂີນນ້ຳໃຊ້, ໃນໄລຍະຜ່ານມາ ທ່ານປະທານສະພາແຫ່ງຊາດ ໄດ້ມີການລະດົມທຶນຮອນຈາກຜູ້ພັດທະນາໄດ້ຈຳ ນວນໜຶ່ງ ເພື່ອສ້າງໃຫ້ມີໂຄງການ ເຊິ່ງເບື້ອງຕົ້ນແມ່ນໂຄງການເຈາະນ້ຳບາດານ, ແຕ່ໄລຍະຕໍ່ມາຈຶ່ງໄດ້ມີການສົມທົບທຶນຈາກບ້ວງກອງທຶນພັດທະນາຊຸມຊົນຂອງໂຄງການເຂື່ອນໄຟຟ້ານ້ຳເທີນ 1 ໃນມູນຄ່າ 3 ຕື້ກວ່າກີບ ເພື່ອສ້າງເປັນໂຄງການນ້ຳປະປາໃຫ້ແກ່ບ້ານດັ່ງກ່າວ, ລະບົບນ້ຳປະປາແຫ່ງນີ້ຈະສາມາດປະກອບສ່ວນສ້າງເງື່ອນໄຂສະດວກກວ່າເກົ່າໃຫ້ແກ່ການທຳມາຫາກິນຂອງພໍ່ແມ່ປະຊາຊົນ ຈຳນວນ 364 ຄອບຄົວທີ່ມີຈຳນວນປະຊາຊົນ 1.896 ຄົນ, ເປັນການຍົກສູງຄຸນນະພາບຊີວິດຂອງປະຊາຊົນໃຫ້ນັບມື້ນັບດີຂຶ້ນ. ນອກຈາກນີ້, ໂຄງການດັ່ງກ່າວຍັງຈະເປັນການປະກອບສ່ວນຢ່າງຫຼວງຫຼາຍໃຫ້ແກ່ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມຂອງບ້ານຈອມທອງ ແລະ ບ້ານທາດພູວຽງ ເມືອງວຽງທອງ ເຊິ່ງແມ່ນບ້ານໜຶ່ງທີ່ນອນໃນບຸລິມະສິດສ້າງບ້ານໃຫຍ່ກາຍເປັນຕົວເມືອງນ້ອຍ ເພື່ອເປັນການສ້າງເງື່ອນໄຂໃນການບັນລຸເປົ້າໝາຍສະຫັດສະວັດເພື່ອການພັດທະນາ (MDGs) ໃນປີ 2025, ເຊື່ອໝັ້ນວ່າ ປະຊາຊົນບ້ານຈອມທອງຈະປົກປັກຮັກສາໂຄງການລະບົບນ້ຳປະປານີ້ໃຫ້ດີແລະສາມາດນຳໃຊ້ໄດ້ຍາວນານ ເພື່ອໃຫ້ລູກຫຼານຂອງພວກເຮົານຳໃຊ້ຕໍ່ໄປພາຍໜ້າ.

ໂອກາດນີ້, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມ ແລະ ອຸປະກອນການຮຽນຈຳນວນໜຶ່ງ ມອບໃຫ້ບ້ານຈອມທອງ ເພື່ອນຳໄປມອບຕໍ່ໃຫ້ຜູ້ທີ່ມີຄວາມຈຳເປັນ ແລະ ຂາດເຂີນ.

**(ກົງທະນູຄຳ ພິພັດເສລີ)**




# ເປັນຫຍັງຈຶ່ງຕ້ອງລະອາຍແກ່ໃຈ

# ດົ້ນກົບເມກ

ຄຳຕອບກ່ຽວຄຳຖາມທີ່ຄົນເຮົາຕ້ອງລະອາຍແກ່ໃຈຍ້ອນຄຸນນະທຳຂໍ້ນີ້ ມັນສາມາດຄຸ້ມຄອງສັງຄົມໃຫ້ຢູ່ເປັນສຸກໄດ້; ຊ່ວຍໃຫ້ລະບົບວຽກງານດຳເນີນໄປເປັນປົກກະຕິ ເພາະຄວາມລະອາຍແກ່ໃຈມັນຄື: ທຳມະຄຸ້ມຄອງບໍ່ໃຫ້ໂລກສັບສົນ ວຸ້ນວາຍ ເຊິ່ງທ່ານຜູ້ອ່ານລອງຄິດເບິ່ງວ່າ ຖ້າມີຄົນບໍ່ລະອາຍແກ່ໃຈ ມີຍົດຕຳແໜ່ງສູງ ອັນໃດກໍຢາກໄດ້ເຂົ້າຖົງ ຮັບຮອງວ່າລູກນ້ອງໄດ້ແຕ່ສັ່ນຫົວໄປຕາມກັນທັງນັ້ນ.

ເປັນຫຍັງຜູ້ຂຽນຈຶ່ງເວົ້າວ່າ ຄຸນນະທຳຄືຄວາມລະອາຍແກ່ໃຈ ເປັນທຳມະຄຸ້ມຄອງໂລກ ແລະ ສັງຄົມ ເພາະວ່າພະພຸດທະເຈົ້າ ໄດ້ສອນໄວ້ແຈ້ງວ່າ: ທຳມະຄຸ້ມຄອງໂລກບໍ່ໃຫ້ຈິບຫາຍເສື່ອມໄປຈາກມະນຸດສະທຳ ກໍຄືທຳມະທີ່ເປັນຄຸນນະທຳປະຈຳໃຈມະນຸດ ສອງປະການຄື: (1) ຫິຣິ: ຄວາມລະອາຍແກ່ໃຈ ຄວາມລະອາຍຕໍ່ບາບ ເຊິ່ງໝາຍເຖິງ ການລະອາຍແກ່ໃຈຕົນເອງໃນການເຮັດຄວາມຊົ່ວ; ລະເມີດສິນທຳ ຫຼື ກົດໝາຍບ້ານເມືອງ; ຢ່າລືມວ່າຄົນທີ່ມີຫິຣິຄວາມລະອາຍແກ່ໃຈຈະບໍ່ເຮັດຄວາມຊົ່ວ; ລະອາຍໃຈທີ່ຈະເຮັດຊົ່ວທັງຕໍ່ໜ້າ ແລະ ລັບຫຼັງ ຊື່ວ່າບໍ່ສ້າງຄວາມເດືອດຮ້ອນວຸ້ນວາຍແກ່ຄົນອ້ອມຂ້າງ ແລະ ສັງຄົມ. (2) ໂອດຕັບປະ ແປວ່າ: ຄວາມຢ້ານກົວຕໍ່ບາບ ຕໍ່ການປະພຶດຊົ່ວ ໝາຍຄວາມວ່າຄົນຜູ້ນັ້ນຢ້ານກົວຄວາມຜິດໃນການເຮັດຊົ່ວ ຢ້ານຜົນທີ່ຕາມມາຄືດັ່ງເງົາຕາມໂຕ, ຜົນກະທົບໂດຍກົງຈາກການປະພຶດທຸດຈະລິດຄື: ຊື່ສຽງເສຍຫາຍ ສັງຄົມຕຳນິ ນິນທາ; ເສື່ອມເສຍກຽດສັກສີ; ຄົນໃດທີ່ມີ ໂອດຕັບປະຢູ່ໃນໃຈ ກໍຈະບໍ່ປະພຶດຊົ່ວ ພາໃຫ້ສັງຄົມມີຄວາມສະຫງົບສຸກ; ຄຸນນະທຳສອງປະການນັ້ນ ທ່ານຜູ້ອ່ານລອງຄິດເບິ່ງວ່າ ຖ້າໃຜຂາດຄຸນນະທຳສອງຂໍ້ນັ້ນ ຈະພາໃຫ້ສັງຄົມສັບສົນວຸ້ນວາຍພຽງໃດ ເພາະໃຈບໍ່ລະອາຍບາບ; ໃຈບໍ່ລະອາຍຕໍ່ການປະພຶດຊົ່ວ ຢ່າລືມວ່າໂລກເຮົາເສື່ອມຈິບຫາຍກໍຍ້ອນຄົນຂາດທຳມະສອງຂໍ້ນີ້.

ສັງລວມໄດ້ວ່າ ການລະອາຍແກ່ໃຈມີຫຼາຍລະດັບເຊັ່ນ: ຄົນມີກັບຄົນບໍ່ມີ, ຄົນມີເຫຼືອຖົງ ຢູ່ກິນສະບາຍ ສ່ວນຄົນບໍ່ມີຢູ່ ກິນ ອຶດຫິວເໜັບໜາວ ຖ້າລະອາຍແກ່ໃຈ ເຮົາກໍຈະເຫັນໃຈກັນເນາະ !




# ວິທີເຮັດວຽກ

**ພາກທີ 5**

**ບັນຫາວິທີເຮັດວຽກ**

3. ບໍ່ຮູ້ຄົ້ນຄວ້າຈົນເຖິງຕົ້ນຕໍຂອງມັນ: ໃນບັນດາການຂົນຂວາຍຄືດັ່ງການເພີ່ມພູນຜະລິດຜົນ, ການປະຊາສຶກສາ, ການລະດົມທະຫານໃນຍາມໜາວ ແລະ ອື່ນໆ, ພວກເຮົາກໍໄດ້ຮັບຜົນງານດີພໍສົມຄວນ, ແຕ່ພວກເຮົາຍັງບໍ່ທັນຊ່າງຄົ້ນຄວ້າຈົນເຖິງກົກເຖິງເຄົ້າ ເພື່ອໃຫ້ຮູ້ວ່າດ້ວຍເຫດໃດຈຶ່ງໄດ້ຮັບຜົນງານດີພໍສົມຄວນ. ດັ່ງນັ້ນ, ເພື່ອໃຫ້ຮູ້ວ່າແມ່ນຜູ້ໃດເປັນຜູ້ເຮັດໃຫ້ໄດ້ຮັບຜົນງານອັນນັ້ນ ແລະ ອື່ນໆອີກ, ສຳລັບຈະຮຽນເອົາບົດຮຽນອັນນັ້ນໄປຕັ້ງເປັນແບບຢ່າງໃຫ້ແກ່ວຽກງານອັນອື່ນ. ເປັນແນວນັ້ນ ສິ່ງທີ່ດີທີ່ງາມພວກເຮົາກໍບໍ່ຂະຫຍາຍອອກໄດ້, ວຽກງານແລ້ວກໍເລີຍເຊົາ, ພະນັກງານກໍບໍ່ຮຽນເອົາບົດຮຽນຫຍັງ ໄດ້ແລ້ວກໍບໍ່ກ້າວໜ້າໄດ້ພໍທໍ່ໃດ.

ພ້ອມກັນນັ້ນ ພວກເຮົາກໍບໍ່ໄດ້ອອກແຮງຄົ້ນຄວ້າເບິ່ງຂໍ້ຫຍຸ້ງຍາກ, ເບິ່ງບ່ອນໃດຜິດພາດເພື່ອເອົາໄປແກ້ໄຂໃຫ້ທັນເວລາ. ຍົກຕົວຢ່າງກໍຄື: ພະນັກງານຫຼາຍຄົນມັກເອົາໃຈໃສ່ເຮັດແຕ່ວຽກງານຂອງພັກແລ້ວກໍເມີນເສີຍຕໍ່ວຽກງານໃນຄອບຄົວຂອງຕົນ ເປັນເຫດໃຫ້ພໍ່ແມ່, ລູກເມຍຂອງຕົນບໍ່ມ່ວນຊື່ນແລະເປັນຜົນສະທ້ອນບໍ່ດີເຖິງປະຊາຊົນອີກດ້ວຍ. ມີພະນັກງານບາງບ່ອນມີຄວາມສະຫຼາດສະຫຼຽວ ວາງຄຳຂວັນອອກວ່າ: "ປະຕິວັດຄອບຄົວ" ແລະ ອື່ນໆອີກ, ແຕ່ວ່າໝົດທັງຂະບວນຂອງບັນຫາດັ່ງກ່າວກໍຍັງບໍ່ທັນແກ້ໄຂໄດ້. ເມື່ອບັນຫານີ້ບໍ່ໄດ້ຖືກແກ້ໄຂຢ່າງຖືກຕ້ອງຕາມຫຼັກການ ກໍພາໃຫ້ເກີດຜົນສະທ້ອນອັນບໍ່ດີ ມາໃຫ້ແກ່ການກ້າວໜ້າຂອງພວກພະນັກງານເອງ. ການໃຊ້ພະນັກງານບໍ່ຖືກກັບຄວາມສາມາດຂອງເຂົາເຈົ້າ ກໍແມ່ນເຫດອັນໜຶ່ງອີກທີ່ເຮັດໃຫ້ເກີດມີການປະລາໄຊ. ຍົກຕົວຢ່າງ: ຄົນຜູ້ໜຶ່ງຂຽນເກັ່ງແຕ່ບໍ່ຊ່າງເວົ້າ, ເຮົາຊໍ້າພັດຈັດເຂົ້າໄປເຮັດວຽກອັນທີ່ຕ້ອງປາກຕ້ອງເວົ້າຫຼາຍ; ຄົນຜູ້ເວົ້າເກັ່ງ ຂຽນບໍ່ດີ ຊໍ້າພັດຖືກແຕ່ງຕັ້ງໄປເຮັດວຽກທີ່ຂີດຂຽນ. ເຮັດແນວນັ້ນ ກໍເປັນເຫດໃຫ້ພະນັກງານທັງສອງຄົນເຮັດວຽກບໍ່ມີຜົນງານອັນດີຈັກຄົນ.

ອ່ານຕໍ່ສະບັບໜ້າ...




# ທໍລະມານ – ທາລຸນ

'ທໍລະມານ' ເປັນຄຳກິລິຍາ ມາຈາກເຄົ້າປາລີ-ສັນສະກິດ ຄຳເດີມອອກສຽງວ່າ Dhamana (ທະມະນະ) ແລ້ວແປງສຽງເປັນ 'ທະຣະມັນ' ແລະ ກາຍສຽງເປັນຄຳລາວວ່າ 'ທໍລະມານ' ໝາຍເຖິງ "ເຮັດໃຫ້ລຳບາກ, ເຮັດທາລຸນ" ເຊັ່ນ

- ຢ່າທໍລະມານຫົວໃຈກັນເລີຍ.
- ເຮົາຜູ້ເປັນມະນຸດບໍ່ຄວນທໍລະມານສັດ.
- ຊາຍຜູ້ນັ້ນຖືກທໍລະມານດ້ວຍການມັດໃສ່ຕົ້ນໄມ້.
- ພວກລ່າເມືອງຂຶ້ນໄດ້ທໍລະມານວິລະຊົນສີທອງດ້ວຍການເອົາໄຟແດງໆມາດາດ.

ນອກຈາກນັ້ນ ທໍລະມານ ຍັງໝາຍເຖິງ "ຮູ້ສຶກເຈັບປວດ ຮູ້ສຶກລະທົມທຸກ".

- ເວລາເຈັບແຂ້ວ ຈັ່ງແມ່ນມັນທໍລະມານແທ້ໆ !
- ອາກາດໜາວ ຄັນບໍ່ມີຜ້າຫົ່ມຈະຮູ້ສຶກທໍລະມານຫຼາຍ.

'ທາລຸນ' ເປັນຄຳວິເສດ ຈາກເຄົ້າປາລີ Dāruṇa (ທາຣຸນະ) ແປຕາມຮູບສັບ ໝາຍເຖິງ "ພາວະອັນເຮັດໃຫ້ຄົນຢ້ານ" ແລ້ວແປງສຽງເປັນຄຳລາວວ່າ ທາລຸນ ໝາຍເຖິງ "ໂຫດຮ້າຍ, ຮ້າຍຂາດ, ທຸກທໍລະມານ" ເຊັ່ນ

- ລາວຖືກບີບບັງຄັບໃຫ້ຮັບສາລະພາບຢ່າງທາລຸນ.
- ການກະທຳທີ່ທາລຸນຕໍ່ແມ່ຍິງ ແລະ ເດັກນ້ອຍ ເປັນສິ່ງທີ່ສັງຄົມຮັບບໍ່ໄດ້.
- ນາງໄດ້ເປັນທາດຮັບໃຊ້ຢູ່ໃນທີ່ນັ້ນ ແລະ ໄດ້ຖືກກົດຂີ່ຢ່າງທາລຸນເປັນເວລາຫຼາຍປີ.

'ທາລຸນ' ຖ້າໃຊ້ເປັນຄຳກິລິຍາ ກໍໝາຍເຖິງ "ທຳຮ້າຍ, ເຮັດໃຫ້ເກີດຄວາມເຈັບປວດຢ່າງຮຸນແຮງ" ເຊັ່ນ

- ແມ່ຍິງຄົນນັ້ນຖືກທາລຸນຈາກຜົວຂອງຕົນເອງ.
- ມີການຟ້ອງຮ້ອງຈາກໄທບ້ານວ່າ ມີເດັກນ້ອຍຖືກທາລຸນຈາກພໍ່ນ້າ.
- ພວກທະຫານຟາດຊິດໄດ້ທາລຸນສະເລີຍເສິກຢ່າງໂຫດຫ້ຽມ.



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ອະດີດ | ອາດີດ |
| ອະນາຄົດ | ອານະຄົດ |
| ອະນາໄມ | ອານະໄມ |
| ອະນຸບານ | ອານຸບານ |
| ອະນຸວົງ | ອານຸວົງ |
| ອະມະຕະ | ອາມະຕະ |
| ອະໄພ | ອາໄພ |
| ອະຄະຕິ | ອັກຄະຕິ |
| ອະວະກາດ | ອາວະກາດ |



## ສຸກສະບາຍທາຍໂລດ

# ຜັກ 5 ຊະນິດ ບໍ່ຄວນກິນດິບ

ໂດຍ: ທິວກະທິ



ຜັກທີ່ເຮົາກິນກັນຢູ່ທຸກມື້ ມີບາງຊະນິດບໍ່ຄວນກິນຕອນດິບໆໃນປະລິມານຫຼາຍ ເພາະອາດຈະສົ່ງຜົນກະທົບຕໍ່ສຸຂະພາບເຮົາໄດ້ ບາງຊະນິດຫາກກິນຕອນຍັງດິບ ຍັງມີຜົນຕໍ່ຮ່າງກາຍຫຼາຍກວ່າທີ່ເຮົາຄິດ ເຊິ່ງມີດັ່ງລຸ່ມນີ້:

**1. ກະຫລ່ຳປີ,** ກະຫລ່ຳປີດອກ ແລະ ບ່ອກໂຄຣີເພາະຜັກເຫຼົ່ານີ້ມີສານກອຍໂຕເຈນ ເຊິ່ງໄປຂັດຂວາງການເຮັດວຽກຂອງຕ່ອມໄທຣອຍ (thyroid) ໃນການດັກຈັບໄອໂອດີນ ເຊິ່ງອາດເຮັດໃຫ້ມີໂອກາດເປັນພະຍາດໄທຣອຍ ຫຼື ຄໍໜຽງກີນເລືອດໄດ້;

**2. ໝາກຖົ່ວຍາວ** ຍິ່ງເປັນຖົ່ວດິບແລ້ວຈະມີກາສຄ່ອນຂ້າງຫລາຍ ໂດຍສະເພາະກາສຄາບອນໄດອອກຊາຍ (Carbondioxide) ເຊິ່ງເຮັດໃຫ້ມີອາການທ້ອງອືດ;

**3. ຖົ່ວງອກ** ທີ່ຫຼາຍຄົນມັກໃສ່ເຝີ ຫຼື ເຂົ້າປຸ້ນ ໃນຖົ່ວງອກດິບມີສານຜິດທຳມະຊາດຊື່ໄຟເຕດ (Phytate) ສານຕົວນີ້ຈະໄປຈັບແຮ່ທາດບາງຊະນິດຢູ່ໃນອາຫານ ເຮັດໃຫ້ຮ່າງກາຍບໍ່ສາມາດດູດຊຶມແຮ່ທາດເຫຼົ່ານັ້ນເຂົ້າສູ່ຮ່າງກາຍ ຈະເຮັດໃຫ້ເປັນໂຣກຂາດແຮ່ທາດ ແຕ່ສານໄຟເຕດຈະຖືກທຳລາຍໂດຍການຕົ້ມ ຫຼື ປຸງແຕ່ງໃຫ້ສຸກ;

**4. ຜັກຫົມ** ບໍ່ຄວນກິນດິບ ເພາະກົດໃນຜັກຫົມຈະຂັດຂວາງການດູດຊຶມທາດເຫຼັກ;

**5. ໜໍ່ໄມ້ ແລະ ມັນຕົ້ນ** ມີສານໄຊຢາໄນສູງ ມີຜົນຕໍ່ລະບົບປະສາດ ເຮັດໃຫ້ມຶນງົງໄດ້ ຜູ້ບໍລິໂພກຄວນນຳໄປຕົ້ມຫຼາຍນ້ຳ ກ່ອນນຳໄປປຸງອາຫານ.

**ຂໍ້ມູນຈາກ:**
**www.laopost.com**



## ຫັກສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

\# ສາວຈົ້ມ

✻ ***ຊົມ**ເຊີຍສະພາແຫ່ງຊາດ ທີ່ປະກາດເປີດຊຸດຮຽນທິດສະດີການເມືອງຂັ້ນຕົ້ນ **ຊຸດທີ II** ໃນຕອນເຊົ້າຂອງວັນທີ **19 ກຸມພາ** ເພື່ອຍົກສູງຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບທິດສະດີການເມືອງ ໃຫ້ແກ່ສະມາຊິກພັກ-ພະນັກງານຫຼັກແຫຼ່ງພາຍໃນສະພາແຫ່ງຊາດ ຈຳນວນ **43 ສະຫາຍ** ລໍໃຫ້ສົມຊື່ສ້າງ ເປັນຫຼັກແຫຼ່ງບຳພາ **ໄດເນີ!** ພາຍຫຼັງຮຽນຈົບມາ ໃຫ້ວຽກການງານກ້າວ ລໍໃຫ້ເອົາໃຈຕັ້ງປະຕິບັດຮັບຜິດຊອບ ເປັນກຳລັງແກ່ນກ້າ ສົມວ່າເປັນຜູ້ກ້າວ ນຳໜ້າເພື່ອນສະຫາຍ **ນັ້ນແລ້ວ!***

✻ ***"ຊ່າວ"** ສຳຫຼວດຄວາມເປັນໄປໄດ້ ໃນການພັດທະນາ**ທ່າເຮືອສາກົນ** ຢູ່ເມືອງລອງ ແຂວງຫຼວງນ້ຳທາ ເສີງເຫັນວ່າ ມີການເຊັນບົດບັນທຶກຄວາມເຂົ້າໃຈ ໃນວັນທີ 14 ກຸມພາ ເພື່ອສຶກສາ**ສຳຫຼວດຄວາມເປັນໄປໄດ້**ໃນການພັດທະນາໂຄງການດັ່ງກ່າວ ເຫັນຂ່າວກໍ່ຕື່ນເຕັ້ນກະສັນສັ່ນດີໃຈ ທີ່ໄດ້ເຫັນເມືອງລາວ ພັດທະນາໄປໜ້າປອງປະຊາດີໃຈລົ້ນ ລໍຄອຍຟັງຜົນສຳເລັດ ລໍຈົ່ງເຮັດໃຫ້ໄດ້ ປອງປະຊາໃຫຍ່ນ້ອຍ ຊົມເຊີຍຍ້ອງຊື່ນຊົມ **ແທ້ເດ!***

## ອາດ ກະວີລາວ

# ຂໍເຫຍືອເຂົ້າຕາ

\# ຫຼານເຈົ້ານ້ອຍ

✻ ແມ່ນວ່າຕາແຈ່ມແຈ້ງ
ກໍຍັງມີແນວຕຳ
ຕາເອີຍສັງບໍ່ເອົາຕີນເວັ້ນ
ບໍ່ໃຫ້ມວນລະອອງຝຸ່ນເຂົ້າ

ແຍງເບິ່ງເຫັນດີ
ຕ່ອຍຕີຕາໄດ້
ຫາທາງລຽງຫຼີກ
ໃນເຈົ້າຂຸ່ນເຄືອງ

✻ ຍາມເມື່ອມີສິ່ງເຂົ້າ
ກໍຕ້ອງອາໄສມື
ຕ້ອງໄດ້ອາໄສນ້ຳ
ຕາຈຶ່ງຄືນສະຫວ່າງແຈ້ງ

ເນົານັ່ງໃນຕາ
ເຂ່ຍຂອງຄາໃຫ້
ໃນຊາມມາສວ່າຍ
ແຍງໄດ້ດັ່ງເດີມ

✻ ໂຕເອງດີເດັ່ນດ້ອຍ
ເຮົາຕ້ອງອາໄສຄົນ
ບໍ່ແມ່ນໂຕເອງຍ້ອງ
ເພາະວ່າສິ່ງຊົ່ວຊາມຕ່ຳຊ້າ

ເຮົາບໍ່ຫວນເຫັນ
ອື່ນດູແລໃຫ້
ຍໍຕົນດີເດັ່ນ
ເຮົານັ້ນເບິ່ງບໍ່ເຫັນ ດອກນາ!

✻ ຢ່າໄດ້ໂຊອວດໂອ້
ຄວາມຊົ່ວມີຄົນເຫັນ
ເພື່ອນຝູງເຂົາເຕືອນໃຫ້
ຢ່າໄດ້ເຄືອງຂຸ່ນຂ້ອງ

ຄຸຍວ່າຕົນດີ
ເດັ່ນຕາປະຈັກແຈ້ງ
ເຮົາເຫັນຈຸດອ່ອນ
ຈອງຫອງທ້າຕ່ອຍຕີ

✻ ໃຜຈະມາເອີ່ຍເວົ້າ
ຈົ່ງນຳເອົາໄປຄິດ
ຄັນມີຈິງເຮົາຕ້ອງ
ຄັນບໍ່ຈິງກໍຢ່າໄດ້

ເຮົາຊົ່ວແນວໃດ
ຮີບຕອງປະຈັກແຈ້ງ
ປັບປຸງແປງປ່ຽນ
ໂວຍວາຍໂຕ້ຕອບຄືນ




## ຊວນຍິ້ມ

\# ແອ່ນຕຸ້ງ

### ເລື່ອງ: ຄືຊິບໍ່ພໍ່

ມີຍິງສາວຄົນໜຶ່ງມາປຶກສາທ່ານໝໍເລື່ອງຢາຄຸມກຳເນີດ

**ຍິງສາວ:** ສະບາຍດີທ່ານໝໍນ້ອງລໍຖາມເລື່ອງຢາຄຸມກຳເນີດແດ່ ວ່າກິນແນວໃດ?

**ທ່ານໝໍ:** ໄດ້ໆ ຢາຄຸມກຳເນີດກິນຄັ້ງລະເມັດຫຼັງມີເພດສຳພັນ

**ຍິງສາວ:** ແມ່ນບໍ່ວາ ຊັ້ນນ້ອງລໍຢາມາໄວ້ກິນແດ່

**ທ່ານໝໍ:** ໄດ້ໆ ໝໍຊິຈັດຢາໃຫ້

ແລ້ວທ່ານໝໍກໍ່ຈັດຢາໃຫ້ຍິງສາວໃຫ້ກິນໄດ້ 1 ອາທິດ ແຕ່ມື້ຕໍ່ມາຍິງສາວຄົນນັ້ນ ກໍ່ກັບມາຫາທ່ານໝໍຕື່ມອີກ

**ທ່ານໝໍ:** ເປັນອີຫຍັງບໍ່ມື້ນີ້

**ຍິງສາວ:** ລ້ອຍກໍ່ກິນຕາມໝໍແນະນຳທັນແລ້ວ ມື້ຄືນນີ້ຂ້ອຍກະກິນໄປ 5 ເມັດ ມື້ນີ້ຂ້ອຍຄິດວ່າຢາຄືຊິບໍ່ພໍແທ້ໆ ເລີຍມາຂໍຕື່ມ

**ທ່ານໝໍ:** ??????

## ຄະຕິເຕືອນໃຈ

\# ດອກຫຍ້າ

ເຮືອນໃດຍາມກິນເຂົ້າ ຫຼາຍພາມັນແມບ
ເຮືອນນັ້ນເສິກບໍ່ມື້ ໃຈບ້າບໍ່ຄອງປາ



## ພົບປະສອງຝ່າຍ...

(ຕໍ່ຈາກໜ້າ 3)

ບັນຍັດ, ການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນ ແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ພິເສດ, ໄດ້ຮ່ວມກັນລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບລັດຖະສະພາໄທ ໃນເດືອນທັນວາ 2022 ເຊິ່ງເປັນນິມິດໝາຍອັນສຳຄັນທາງປະຫວັດສາດແຫ່ງການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ, ເປັນການປະກອບສ່ວນຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດແຜນປະຕິບັດງານການເປັນຄູ່ຮ່ວມຍຸດທະສາດ ເພື່ອການຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງລະຫວ່າງສອງປະເທດ ລາວ-ໄທ.

ເພື່ອເຮັດໃຫ້ສອງອົງການນິຕິບັນຍັດລາວ-ໄທ, ໄທ-ລາວ ສືບຕໍ່ຮ່ວມມືກັນຢ່າງເປັນຮູບປະທຳຍິ່ງຂຶ້ນ ທັງສອງຝ່າຍໄດ້ປຶກສາຫາລືກ່ຽວກັບແຜນການຮ່ວມມືໃນຕໍ່ໜ້າ ໂດຍສະເພາະແມ່ນການສືບຕໍ່ແລກປ່ຽນຄະນະຜູ້ແທນຄະນະມິດຕະພາບລັດຖະສະພາ ໃນນາມເປັນກົນໄກການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ພ້ອມທັງແລກປ່ຽນຂໍ້ມູນຂ່າວສານໃນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ ແລະ ໃນຫົວຂໍ້ອື່ນໆທີ່ສອງຝ່າຍມີຄວາມສົນໃຈ ເປັນຕົ້ນແມ່ນການສ້າງກິດຈະກຳ ຫຼືໂຄງການໃດໜຶ່ງທີ່ເປັນສັນຍະລັກມິດຕະພາບການຮ່ວມມືລະຫວ່າງສອງຄະນະລັດຖະສະພາລາວ-ໄທ, ໄທ-ລາວ; ການສ້າງຊັບພະຍາກອນມະນຸດເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ພະນັກງານຂອງສະພາແຫ່ງຊາດລາວ; ການຊຸກຍູ້ສົ່ງເສີມໃຫ້ນັກທຸລະກິດ ແລະ ບັນດາບໍລິສັດຂອງໄທ ມາລົງທຶນ, ການຮ່ວມມືດ້ານຕ່າງໆຢູ່ ສປປລາວ ແລະລະຫວ່າງປະຊາຊົນກັບປະຊາຊົນຂອງສອງປະເທດ ໃຫ້ນັບມື້ເພີ່ມຂຶ້ນ; ຊຸກຍູ້ ແລະ ສົ່ງເສີມການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆທີ່ສອງລັດຖະບານຂອງສອງປະເທດລົງນາມຮ່ວມກັນ ໃຫ້ປາກົດເປັນຈິງ; ສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນການເຄື່ອນໄຫວ ຢູ່ເວທີລັດຖະສະພາພາກພື້ນ ແລະ ສາກົນ.

ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ຂອງຄະນະມິດຕະພາບລັດຖະສະພາ ໄທ-ລາວ ຄັ້ງນີ້ ຍັງໄດ້ນຳເອົາອຸປະກອນການສຶກສາ ແລະ ຄອມພິວເຕີລວມມູນຄ່າທັງໝົດ 472.000 ບາດ ມາມອບໃຫ້ແກ່ໂຮງຮຽນສາມັນກິນນອນຊົນເຜົ່າວັງວຽງ, ເຊິ່ງເປັນການຊ່ວຍເຫຼືອອັນລ້ຳຄ່າທາງດ້ານການສຶກສາໃຫ້ແກ່ ສປປ ລາວ. ພິທີມອບ-ຮັບເຄື່ອງຊ່ວຍເຫຼືອໄດ້ຈັດຂຶ້ນໃນວັນທີ 16 ກຸມພາ 2024 ທີ່ໂຮງຮຽນດັ່ງກ່າວ, ມອບໂດຍທ່ານຕວງ ອັນທະໄຊ ແລະ ຕາງໜ້າຮັບໂດຍທ່ານ ລຳໄມ ກູດລາວົງ ຮອງປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີທ່ານ ສຸບັນ ສະວະບຸດ, ເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳລາຊະອານາຈັກໄທ, ເຈົ້າເມືອງວັງວຽງ ພ້ອມດ້ວຍຄະນະຜູ້ອຳນວຍການ, ຄູ-ອາຈານ ແລະ ນັກຮຽນໂຮງຮຽນສາມັນກິນນອນຊົນເຜົ່າວັງວຽງ.

ຄະນະມິດຕະພາບລັດຖະສະພາ ໄທ-ລາວ ຍັງໄດ້ຢ້ຽມຢາມພື້ນຖານທາງດ້ານວັດທະນະທຳ ແລະ ທ່ອງທ່ຽວຈຳນວນໜຶ່ງຢູ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງຫຼວງພະບາງ ອີກດ້ວຍ.

**(ນາງ ກຸກກີກ ບຸດດາໄຊ)**

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 3)

ຊິກສະພາປະຊາຊົນເມືອງ-ເທສະບານ; ໃນການເລືອກຕັ້ງຄັ້ງນີ້, ບັນດາຜູ້ມີສິດເລືອກຕັ້ງໄດ້ໃຊ້ບັດເລືອກຕັ້ງ 5 ປະເພດ ໃນການລົງຄະແນນສຽງເລືອກເອົາຜູ້ລົງສະໝັກ ແລະ ພັກການເມືອງ ທີ່ຕົນເອງຕ້ອງການ ເຊິ່ງມີພັກການເມືອງ 18 ພັກ ລົງແຂ່ງ ຂັນກັນ.

ການເລືອກຕັ້ງປະທານາທິບໍດີ ແລະ ຮອງປະທານາທິບໍດີ ມີຈຳນວນ 3 ຄູ່ທີ່ລົງສະໝັກຄື: ຜູ້ລົງສະໝັກນ້ຳເບີ 1: ທ່ານ Anies Baswedan ອາຍຸ 56 ປີ, ອະດີດເຈົ້າຄອງນະຄອນຫຼວງຈາກາຕາ ຈັບຄູ່ກັບທ່ານ Muhaimin Iskandar ໄດ້ຮັບການສະໜັບສະໜູນຈາກພັກ National Democratic Party (NasDem), National Awakenning Party (PKB), Prosperous Justice Party (PKS) ແລະ ພັກ Ummah Party; ຜູ້ລົງສະໝັກນ້ຳເບີ 2: ທ່ານ Prabowo Subianto ອາຍຸ 72 ປີ, ລັດຖະມົນຕີກະຊວງປ້ອງກັນປະເທດ ຈັບຄູ່ກັບທ່ານ Gibran Rakabuming Raka ລູກຊາຍຂອງປະທານາທິບໍດີ ໂຈໂກ ວິໂດໂດ ໄດ້ຮັບການສະໜັບສະໜູນຈາກພັກ Great Indonesia Movement Party (Gerindra), ພັກ Golkar, National Mandate Party (PAN) Democratic Party ແລະ ພັກ Indonesian People's Wave Party (Gelora) ແລະ ຜູ້ລົງສະໝັກນ້ຳເບີ 3: ທ່ານ Ganjar Pranowo ອາຍຸ 55 ປີ, ອະດີດເຈົ້າຄອງຈາວາກາງ ຈັບຄູ່ກັບທ່ານ Mahfud MD ໄດ້ຮັບການສະໜັບສະໜູນຈາກພັກ Indonesian Democratic Party of Struggle (PDIP), United Development Party, United Indonesia Party (Perindo) ແລະພັກ People's Conscience Party (Hanura).

ການເລືອກຕັ້ງສະມາຊິກສະພາຜູ້ແທນປະຊາຊົນ ກຳນົດ 84 ເຂດເລືອກຕັ້ງ, ມີຈຳນວນ 580 ບ່ອນນັ່ງ; ການເລືອກຕັ້ງສະມາຊິກສະພາຜູ້ແທນພາກພື້ນ (ສະພາສູງ) ກຳນົດ 38 ເຂດເລືອກຕັ້ງ, ມີຈຳນວນ 152 ບ່ອນນັ່ງ; ການເລືອກຕັ້ງສະມາຊິກສະພາປະຊາຊົນແຂວງ ກຳນົດ 301 ເຂດເລືອກຕັ້ງ, ມີຈຳນວນ 2.372 ບ່ອນນັ່ງ ແລະ ການເລືອກຕັ້ງສະມາຊິກສະພາຜູ້ແທນປະຊາຊົນເມືອງ ກຳນົດເອົາ 2.325 ເຂດເລືອກຕັ້ງ, ມີຈຳນວນ 17.510 ບ່ອນນັ່ງ. ຜູ້ມີສິດເລືອກຕັ້ງຕ້ອງມີອາຍຸຄົບ 17 ປີຂຶ້ນໄປ ເຊິ່ງມີຜູ້ລົງທະບຽນການເລືອກຕັ້ງທັງໝົດ 204.807.222 ຄົນ. ງົບປະມານຮັບໃຊ້ການເລືອກຕັ້ງທັງໝົດ 71.300 ຕື້ຣູເປຍ (ປະມານ 1,7 ຕື້ໂດລາສະຫະລັດ). ໃນວັນທີ 14 ກຸມພາ 2024 ຄະນະກຳມະການການເລືອກຕັ້ງທຸກຂັ້ນ ໄດ້ເປີດຫີບເລືອກຕັ້ງພ້ອມກັນທົ່ວປະເທດນັບແຕ່ເວລາ 07:00 ໂມງເຊົ້າ, ປິດລົງໃນເວ ລາ 13:00 ໂມງ ແລະ ເວລາ 13:30 ຫາ 17:00 ໂມງ ເປັນເວລາໃນການນັບຄະແນນ.

ປະເທດເຈົ້າພາບໄດ້ຈັດແບ່ງເປັນ 3 ກຸ່ມຂອງຜູ້ສັງເກດການ ເພື່ອໄປສັງເກດການຕົວຈິງຢູ່ໜ່ວຍເລືອກຕັ້ງຕ່າງໆໃນເວລາປ່ອນບັດ ແລະ ເວລານັບຄະແນນສຽງການເລືອກຕັ້ງທົ່ວໄປ. ຜ່ານການໄປສັງເກດການດັ່ງກ່າວເຫັນວ່າ ຄະນະກຳມະການການເລືອກຕັ້ງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໄດ້ກະກຽມຄວາມພ້ອມຢ່າງຮອບດ້ານ ເປັນຕົ້ນ: ຄະນະກຳມະການໃນແຕ່ລະບ່ອນເລືອກຕັ້ງ, ບັນດາເຈົ້າໜ້າທີ່, ໜ່ວຍປ່ອນບັດ, ຫີບບັດ, ບັນຊີລາຍຊື່ຜູ້ສະໝັກ, ບັນຊີລາຍຊື່ຜູ້ມີສິດປ່ອນບັດ, ບັດລົງຄະແນນສຽງ ລວມທັງອຳນວຍຄວາມສະດວກດ້ານຕ່າງໆພ້ອມທັງປະຕິບັດ 6 ຫຼັກການການເລືອກຕັ້ງທີ່ເປັນພື້ນຖານເຊັ່ນ: ໂດຍກົງ, ທົ່ວໄປ, ເສລີ, ປິດລັບ, ຊື່ສັດ ແລະ ຍຸຕິທຳ; ຄະນະກຳມະການການເລືອກຕັ້ງໄດ້ກຳນົດເອົາສະໂມສອນຂອງບ້ານ ເປັນໜ່ວຍປ່ອນບັດເລືອກຕັ້ງ ແລະ ກຳນົດເອົາວັນເລືອກຕັ້ງເປັນວັນພັກລັດຖະການ ເພື່ອອຳນວຍຄວາມສະດວກໃຫ້ແກ່ປະຊາຊົນໄດ້ໄປໃຊ້ສິດຂອງຕົນຢ່າງເຕັມສ່ວນ.

ໃນການເຂົ້າຮ່ວມສັງເກດການເລືອກຕັ້ງໃນຄັ້ງນີ້, ທ່ານ ຈັນທະວົງ ແສນອາມາດມົນຕີ ໃນນາມຫົວໜ້າຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ຮ່ວມກັບບັນດາຜູ້ເຂົ້າສັງເກດການຕ່າງປະເທດ ສະແດງຄຳຄິດເຫັນຕໍ່ການເລືອກຕັ້ງທົ່ວໄປຂອງ ສ.ອິນໂດເນເຊຍ ເຊິ່ງໄດ້ປະຕິບັດຕາມຂະບວນການປະຊາທິປະໄຕ, ສະແດງຄວາມຂອບໃຈຕໍ່ປະເທດເຈົ້າພາບທີ່ໄດ້ເຊື້ອເຊີນເຂົ້າຮ່ວມ ແລະ ຍັງຖືໂອກາດນີ້ຮຽນເຊີນບັນດາຜູ້ເຂົ້າຮ່ວມ ໃຫ້ການສະໜັບສະໜູນ ສປປ ລາວ ທີ່ເປັນປະທານອາຊຽນ ແລະສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (ໄອປາ) ພ້ອມທັງຈະເປັນເຈົ້າພາບຈັດກອງປະຊຸມໄອປາ ຄັ້ງທີ 45 ທີ່ຈະຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ ໃນເດືອນຕຸລານີ້; ໃນເວລາໄປສັງເກດການຢູ່ໜ່ວຍເລືອກຕັ້ງຕົວຈິງ, ທ່ານ ຈັນທະວົງ ແສງອາມາດມົນຕີ ຍັງໄດ້ໃຫ້ສຳພາດຕໍ່ນັກຂ່າວຕ່າງປະເທດອີກດ້ວຍ.

ໃນຕອນຄ່ຳວັນດຽວກັນ, ປະເທດເຈົ້າພາບໄດ້ຈັດກອງປະຊຸມເພື່ອທົບທວນຄືນ ແລະ ສະຫຼຸບຕີລາຄາການໄປສັງເກດການການເລືອກຕັ້ງທົ່ວໄປໃນຄັ້ງນີ້; ຄະນະຜູ້ແທນສະພາແຫ່ງຊາດລາວ ເຊິ່ງເປັນຕົວແທນກຸ່ມ 2 ກໍໄດ້ມີຄຳເຫັນ ໂດຍໄດ້ຕີລາຄາ ແລະ ສະແດງຄວາມຊົມເຊີຍຕໍ່ການກະກຽມການເລືອກຕັ້ງຢ່າງຮອບດ້ານ, ດຳເນີນໄປດ້ວຍຄວາມເປັນລະບຽບຮຽບຮ້ອຍ ແລະ ປະຕິບັດ 6 ຫຼັກການການເລືອກຕັ້ງຄື: ໂດຍກົງ, ທົ່ວໄປ, ເສລີ, ປິດລັບ, ຊື່ສັດ ແລະ ຍຸຕິທຳ ທີ່ໄດ້ດຳເນີນໄປຕາມກົດໝາຍວ່າດ້ວຍການເລືອກຕັ້ງທົ່ວໄປສ.ອິນໂດເນເຊຍກຳນົດໄວ້.

ຕາມກົດໝາຍວ່າດ້ວຍການເລືອກຕັ້ງ ຂອງ ສ.ອິນໂດເນເຊຍ ຕ້ອງໄດ້ປະກາດຜົນການເລືອກຕັ້ງຢ່າງເປັນທາງ ການພາຍໃນ 35 ວັນ ນັບຈາກວັນເລືອກຕັ້ງ. ແຕ່ອີງຕາມການນັບຄະແນນຜົນການເລືອກຕັ້ງຢ່າງບໍ່ເປັນທາງການໃນວັນທີ 15 ກຸມພາ 2024 ທ່ານ Prabowo Subianto ອາຍຸ 72 ປີ, ລັດຖະມົນຕີກະຊວງປ້ອງກັນປະເທດ ຈັບຄູ່ກັບທ່ານ Gibran Rakabuming Raka ໄດ້ຮັບຄະແນນ 58,60% ຄາດຄະເນວ່າຈະເປັນປະທານາທິບໍດີ ແລະ ຮອງປະທານາທິບໍດີ ຄົນຕໍ່ໄປ; ສ່ວນຜົນການເລືອກຕັ້ງຂອງສະພານິຕິບັນຍັດແມ່ນພັກ Indonesian Democratic Party of Struggle (PDIP) ໄດ້ຮັບຄະແນນ 16,35% ແລະ ພັກອື່ນໆ ມີຄະແນນຫຼຸດລົງຕາມລຳດັບ.

## ທ່ານ ຄຳໃບ...

(ຕໍ່ຈາກໜ້າ 1)

ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ການມາຢ້ຽມຢາມຂອງຄະນະ ເປັນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຖານບ້ານໃກ້ເຮືອນຄຽງທີ່ດີທີ່ມີແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດລາວ-ໄທ ກໍຄືສອງອົງການນິຕິບັນຍັດໃຫ້ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ; ຕີລາຄາສູງ ແລະ ສະແດງຄວາມຊົມເຊີຍຕໍ່ຜົນການພົບປະເຮັດວຽກລະຫວ່າງສອງຄະນະມິດຕະພາບ ລາວ-ໄທ, ໄທ-ລາວ ເຊິ່ງສອງຝ່າຍໄດ້ທົບທວນຕີລາຄາຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ ພ້ອມທັງໄດ້ຮ່ວມກັນແລກປ່ຽນບົດຮຽນທີ່ດີ ແລະ ປະສົບການການປະຕິບັດໜ້າທີ່ວຽກງານຂອງຕົນ ແລະ ຫົວຂໍ້ອື່ນໆທີ່ສອງຝ່າຍມີຄວາມສົນໃຈນຳກັນ. ສຳລັບການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ລາວ-ໄທ ໃນໄລຍະຜ່ານມາ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ສອງຝ່າຍມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນເປັນປົກກະຕິ, ອັນພົ້ນເດັ່ນແມ່ນການຢ້ຽມຢາມຢ່າງເປັນທາງການຢູ່ລາຊະອານາຈັກໄທຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ເມື່ອເດືອນຕຸລາ 2022 ແລະ ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືກັນເປັນສະບັບທຳອິດຂອງສອງອົງການນິຕິບັນຍັດ ລາວ-ໄທ.

ໃນນາມຄະນະປະຈຳສະພາແຫ່ງຊາດ, ທ່ານ ຄຳໃບ ດຳລັດ ໄດ້ສະເໜີໃຫ້ສອງຄະນະມິດຕະພາບລັດຖະສະພາ ສືບຕໍ່ຍົກລະດັບການພົວພັນຮ່ວມມືກັນ ເພື່ອເສີມຂະຫຍາຍສາຍພົວພັນແລະການຮ່ວມມືຂອງສອງອົງ ການນິຕິບັນຍັດ ໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຍິ່ງໆຂຶ້ນ ໂດຍສະເພາະການແລກປ່ຽນຄະນະຜູ້ແທນຮ່ວມກັນຢ່າງປົກກະຕິ ແລະ ຕໍ່ເນື່ອງ, ແລກປ່ຽນບົດຮຽນໃນຫົວຂໍ້ວິທະຍາສາດຕ່າງໆທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ; ໃນປີນີ້ ສປປ ລາວ ຈະເປັນປະທານອາຊຽນ ແລະ ສະພາແຫ່ງຊາດ ກໍຈະເປັນປະທານກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (ໄອປາ) ຫວັງຢ່າງຍິ່ງວ່າຈະໄດ້ຮັບການສະໜັບສະໜູນຈາກລັດຖະບານ ກໍຄືລັດຖະສະພາໄທ ເພື່ອໃຫ້ ສປປ ລາວ ສຳເລັດໜ້າທີ່ຢ່າງຈົບງາມ.

ທ່ານ ຕວງ ອັນທະໄຊ ໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ພ້ອມທັງແຈ້ງໃຫ້ຊາບຈຸດປະສົງການມາຢ້ຽມຢາມ, ເຮັດວຽກຢູ່ ສປປ ລາວ ເຊິ່ງເປັນການຢ້ຽມຢາມເທື່ອທຳອິດພາຍຫຼັງໄດ້ຮັບການແຕ່ງຕັ້ງເປັນປະທານຄະນະມິດຕະພາບລັດຖະສະພາ ໄທ-ລາວ ແລະ ຜົນສຳເລັດໃນການພົບປະເຮັດວຽກກັບຄະນະມິດຕະພາບລັດຖະສະພາ ລາວ-ໄທ; ໃຫ້ຄຳໝັ້ນວ່າຈະສືບຕໍ່ປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຖານບ້ານໃກ້ເຮືອນຄຽງທີ່ດີທີ່ມີແຕ່ດົນນານລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ໃຫ້ໄດ້ຮັບການເສີມຂະຫຍາຍແລະເປັນຮູບປະທຳຍິ່ງໆຂຶ້ນໄປ ລວມທັງຈະສະໜັບສະໜູນສະພາແຫ່ງຊາດລາວໃນການເປັນປະທານໄອປາ.

**(ນາງ ກຸກກີກ ບຸດດາໄຊ)**

## ເບິ່ງໄວ້ ໄດ້ບົດຮຽນ

ວິເສດ ສະແຫວງສຶກສາ

# ການຮ່ວມມືແກ້ໄຂອາຊະຍາກຳທາງຄອມພິວເຕີ

ພົບກັນຕາມເຄີຍກັບ ຄໍລຳ **"ເບິ່ງໄວ້ໄດ້ບົດຮຽນ"** ທີ່ເຮັດໜ້າທີ່ຈັດສັນກັ່ນຕອງເຫດການໃນຕ່າງປະເທດທີ່ຄວນເບິ່ງໄວ້ເປັນບົດຮຽນ-ທັງບົດຮຽນທີ່ດີ ແລະ ບົດຮຽນທີ່ບໍ່ຄວນໃຫ້ເກີດຂຶ້ນຢູ່ໃນສັງຄົມລາວພວກເຮົາ. ສຳລັບບົດນີ້ ຂໍເວົ້າກ່ຽວກັບເລື່ອງການປາບປາມອາຊະຍາກຳໃກ້ຕົວທີ່ຫຼາຍໆປະເທດພວມປະສົບພົບພໍ້ຢູ່ ແລະ ເລື່ອງນະໂຍບາຍສະໜອງທີ່ພັກອາໄສໃຫ້ປະຊາຊົນ

ສຳລັບເລື່ອງການປາບປາມອາຊະຍາກຳນັ້ນ ຂໍສະເໜີຕາມຂ່າວໜັງສືພິມ ວຽງຈັນທາມ ປະຈຳວັນທີ 27 ພະຈິກ 2023 ທີ່ເວົ້າກ່ຽວກັບການຮ່ວມມືລະຫວ່າງທາງການປະເທດມຽນມາ ແລະ ສປຈີນ ໃນການກຳຈັດ, ປາບປາມຄົນຈີນທີ່ໄປກໍ່ອາຊະຍາກຳທາງຄອມພິວເຕີ ຢູ່ປະເທດມຽນມາ. ການຮ່ວມມືດັ່ງກ່າວແມ່ນນອນຢູ່ໃນຂອບການຮ່ວມມືທີ່ກວມເອົາ ສປຈີນ, ມຽນມາ, ລາວ, ໄທ, ຫວຽດນາມ ແລະ ກຳປູເຈຍ ໃນການປາບປາມອາຊະຍາກຳທີ່ພົນລະເມືອງຂອງປະເທດໜຶ່ງໄປກໍ່ຄວາມບໍ່ສະຫງົບ ຫຼື ລະເມີດກົດໝາຍຂອງອີກປະເທດໜຶ່ງພາຍໃນກຸ່ມ. ຂ່າວໃນເດືອນພະຈິກ 2023 ບອກວ່າ ທາງການມຽນມາໄດ້ຈັບກຸມ ແລະ ຈັດສົ່ງຄົນຈີນ ຈຳນວນ 932 ຄົນ ຄືນໃຫ້ທາງການ ສປຈີນ ດຳເນີນຄະດີຖານລັກລອບເຂົ້າມຽນມາແບບຜິດກົດໝາຍບວກກັບການເຄື່ອນໄຫວກໍ່ອາຊະຍາກຳ ທາງຄອມພິວເຕີຂອງພວກກ່ຽວ ເພື່ອສໍ້ໂກງຫຼອກລວງ ແລະ ຕົ້ມຕຸ໋ນທາງອອນລາຍ, ອັນໄດ້ສ້າງຄວາມເສຍຫາຍໃຫ້ແກ່ມຽນມາ ກໍຄືບັນດາເຫຍື່ອຢູ່ຕ່າງປະເທດ ລວມທັງຄົນຢູ່ໃນ ສປຈີນເອງ. ຜູ້ມີຄວາມຜິດ ຈຳນວນ 932 ຄົນ ທີ່ວ່ານັ້ນ ຖືກຈັດສົ່ງກັບຄືນຈີນ ໃນວັນທີ23 ພະຈິກ 2023 ແຕ່ຖ້ານັບແຕ່ວັນທີ 31 ຕຸລາ ຫາ ວັນທີ 23 ພະຈິກ 2023, ຈຳນວນຄົນຈີນ ທີ່ລະເມີດກົດໝາຍຢູ່ມຽນມາ ແລະ ຖືກຈັບສົ່ງຄືນປະເທດນັ້ນ ມີທັງໝົດ 6.138 ຄົນ ເປັນຍິງ 526 ຄົນ ເຫຼືອນັ້ນແມ່ນເພດຊາຍ. ໃນວັນທີ 21 ພະຈິກ 2023, ທາງກະຊວງປ້ອງກັນຄວາມສະຫງົບຂອງຈີນ ໄດ້ເປີດເຜີຍວ່າ ໃນໄລຍະຜ່ານມາ ໄດ້ມີຄົນຈີນທັງໝົດກວ່າ 31.000 ຄົນ ທີ່ຖືກສົງໄສວ່າມີສ່ວນພົວພັນກັບຄະດີຕົ້ມຕຸ໋ນທາງອອນລາຍຢູ່ປະເທດມຽນມາ ແລະ ຖືກສົ່ງຕົວກັບຄືນຈີນ. ໃນຈຳນວນນີ້ລວມມີບັນດາຫົວໂປ່ໂຕການ ຫຼື ເຈົ້າພໍ່ທີ່ມີບົດບາດສະໜັບສະໜູນ ແລະ ບົ່ງການສຳລັບກຸ່ມແກ້ງຕົ້ມຕຸ໋ນດັ່ງກ່າວ. ຫົວໜ້າກຸ່ມຫຼາຍຄົນເຄີຍມີຄະດີຮ້າຍແຮງຢູ່ຈີນແລ້ວໂຕນໜີ, ພວກນີ້, ທາງການຕ້ອງການຕົວໄປຮັບໂທດກຳຢ່າງສະສົມ.

ຂໍປິດທ້າຍບົດນີ້ ດ້ວຍຂ່າວກ່ຽວກັບນະໂຍບາຍດີໆຈາກ ສປປເກົາຫຼີ ທີ່ເກີດຂຶ້ນໃນໄລຍະ 2 ປີກວ່າໆຜ່ານມາ ນັ້ນຄືນະໂຍບາຍສະໜອງທີ່ພັກພາອາໄສໃຫ້ປະຊາຊົນໃນທົ່ວປະເທດ. ໃຫ້ໄດ້ທັງໝົດ 50.000 ຫົວໜ່ວຍ ຕະຫຼອດໄລຍະການປະຕິບັດມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ 8 ຂອງພັກແຮງງານເກົາຫຼີ. ສຳລັບແຜນການປະຈຳປີ 2021, ເຊິ່ງເປັນປີທຳອິດນັ້ນ, ທາງການ ສປປເກົາຫຼີ ໄດ້ສຳເລັດການກໍ່ສ້າງທີ່ພັກພາອາໄສ ຈຳນວນ 10.000 ຫົວໜ່ວຍຢູ່ນະຄອນຫຼວງພຽງຢາງ. ຂ່າວບອກວ່າ ທ່ານ ກິມຈົງອຶນ, ຜູ້ນຳສູງສຸດ ໄດ້ເອົາໃຈໃສ່ຊີ້ນຳແຜນການກໍ່ສ້າງທີ່ພັກຢ່າງໃກ້ຊິດ ໂດຍເນັ້ນໃຫ້ການກໍ່ສ້າງມີຄຸນນະພາບສູງ ແລະ ສຳເລັດຕາມກຳນົດເວລາ. ທີ່ນຳເລື່ອງນີ້ມາສະເໜີ ກໍເພື່ອໃຫ້ເຫັນນຳກັນ ຂ່າວຈາກແຫຼ່ງທີ່ບໍ່ຫວັງດີນັ້ນເກືອບທັງໝົດແມ່ນບິດເບືອນຄວາມຈິງ, ສ້າງກະແສໃຫ້ເຫັນວ່າ ຜູ້ນຳ ສປປເກົາຫຼີນັ້ນມັກສົງຄາມ, ບໍ່ມີການສ້າງສາພັດທະນາຫຍັງເລີຍ ຍາມໃດກໍມີແຕ່ຢາກເຮັດເສິກກັບເສິກ.

## ກອງປະຊຸມ...

(ຕໍ່ຈາກໜ້າ 3)

ໄດ້ເນັ້ນໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ພ້ອມສະມາຊິກຊາວໜຸ່ມພາຍໃນໜ່ວຍທັງໝົດ ເອົາໃຈໃສ່ບາງບັນຫາທີ່ສຳຄັນ ເປັນຕົ້ນຕັ້ງໜ້າສຶກສາອົບຮົມສະມາຊິກຊາວໜຸ່ມໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ-ແນວຄິດ; ມີຄຸນສົມບັດສິນທຳປະຕິວັດ; ຮັກຊາດ, ຮັກລະບອບປະຊາທິປະໄຕ ເປັນແບບຢ່າງໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ແລະ ການດຳລົງຊີວິດ; ສືບຕໍ່ປັບປຸງກົງຈັກແລະພະນັກງານ, ສະມາຊິກຊາວໜຸ່ມໃຫ້ເຂັ້ມແຂງຮອບດ້ານ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ ສາມາດຮັບປະກັນໄດ້ທາງດ້ານປະລິມານ ແລະ ຄຸນນະພາບ; ສືບຕໍ່ຮັກສາມູນເຊື້ອຄວາມສາມັກຄີ, ມີທັດສະນະມະຫາຊົນ, ມີຄວາມດຸໝັ່ນອົດທົນ, ຄົ້ນຄວ້າສຶກສາຮ່ຳຮຽນຍົກລະດັບຄວາມຮູ້-ຄວາມສາມາດ ໃນການປະຕິບັດວຽກງານໃຫ້ສູງຂຶ້ນເລື້ອຍໆ; ສ້າງ ແລະ ເຂົ້າຮ່ວມຂະບວນການເຄື່ອນໄຫວວຽກງານຊາວໜຸ່ມໃຫ້ຫຼາຍ, ມີບັນຍາກາດຟົດຟື້ນ, ຫ້າວຫັນ ໂດຍມີເນື້ອໃນຕິດພັນກັບການສຶກສາອົບຮົມໄປພ້ອມໆກັນ ແລະ ຍົກສູງສະຕິໃນການບໍລິໂພກຂ່າວສານ ໂດຍມີການກັ່ນຕອງເລືອກເຟັ້ນເອົາສິ່ງທີ່ດີ, ຖືກຕ້ອງ ແລະ ສາມາດໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຢ່າງມີປະສິດທິຜົນ.

**(ນາງ ສຸພາວັນ ທອມສະນິດ)**




## ສອງ ຫຼື ສາມ

*#ບ່າວກະບື*

**ແສງ**ບຽວ ແລະ ນາງນວນ ຊຶ່ງຫາກໍແຕ່ງກັນໃໝ່ໆ ໂສກັນເລື່ອງລູກໆເຕົ້າໆ ຝ່າຍຍິງບອກວ່ານາງຢາກໄດ້ລູກສາມຄົນ ສ່ວນຝ່າຍຊາຍນັ້ນເວົ້າວ່າ ສອງຄົນກໍພໍແລ້ວສຳລັບເຂົາ. ພວກເຂົາປຶກສາກ່ຽວກັບບັນຫາທີ່ບໍ່ລົງລອຍກັນນີ້ຕື່ມອີກສອງສາມນາທີ ຈົນແສງບຽວຄິດວ່າຈະຕ້ອງຍຸຕິເລື່ອງນີ້ໃຫ້ໄດ້. ເຂົາເວົ້າອອກມາຢ່າງຈິງຈັງວ່າ: "ຫຼັງຈາກໄດ້ລູກຜູ້ທີສອງ, ຂ້ອຍຊິໄປເຮັດໝັນໂລດ"

ໂດຍບໍ່ລໍຊ້າ, ຝ່າຍຍິງຕອບອອກມາວ່າ: "ເອີ່ກໍໄດ້... ແຕ່ນ້ອງຄິດວ່າອ້າຍຄົງຈະຮັກລູກຜູ້ທີສາມເໝືອນກັບລູກຄິງຂອງອ້າຍເອງ".

## TWO OR THREE

*#BAOKBU*

Saengbiew and his newly married bride Nuan were discussing the topic of children. The bride said she wanted three children, while the young husband said two would be enough for him. They discussed this discrepancy for a few minutes, until Saenghiew thought he'd put an end to things by saying boldly, "After our second child, I'll just have vasectomy"

Without a moment's hesitation, the bride retorted, "well, I hope you'll love the third one as if it's your own ".

## ຕາມພາສາ ກາຕູນ



ເບກໃຫ້ລູກຫຼານໄດ້ຂ້າມທາງ ຊ່ວຍສ້າງສັງຄົມໜ້າຢູ່

● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ກົງທະນູຄຳ ພິພັດເສລີ
ທ່ານ ນາງ ສຸພາວັນ ທອມສະນິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ